ນິທານຮູບແກ້ວ ວັດຊຽງທອງ

ທຸມພັນ ຣັດຕະນະວົງ

# ນຸ່ງຜ້າລາຍໝາເຫົ່າ



- ປັ້ນພະຍາກິນຣຳ
- ປັ້ນຫ້າງຫ້ອງໄວ້ກິນໄຂ່ແລນ
- ປັ້ນຜີຫົວຫຼ້ອນ
- ປັ້ນທົງຫາມເຕົ່າ

ເລື່ອງຜີຕາແຮກ

ເລື່ອງນົກໄຊ່ ແລະ ຊ້າງສານ
- ປັ້ນຄຸດກັບເຕົ່າຊ່ວງກັນ
- ປັ້ນປະໂຫຍດພຸ້ນພາຍພີ້ຕ່າງກັນ
- ປັ້ນນົກໄຊ່ ແລະ ເສືອໂຄ່ງ

ສະຖາບັນຄົ້ນຄ້ວາວັດທະນະທຳ

2000

- ເລື່ອງຄັດຈາກ ນິທານ ສຽວສະຫວາດ
- ພາບຈາກຮູບແກ້ວ ສຽວສະຫວາດ:

*ວັດຊຽງທອງ ຫຼວງພະບາງ*

- ຮິບໂຮມ - ລິດຈະນາ - ຖ່າຍພາບ

*ໂດຍ: ຫຸມພັນ ຣັດຕະນະວົງ*

- ຊ່າງຈັດໜ້າ - ເຕັກນິກ

*ບົວໄລ ເພັງແສງຄຳ*

ສະຫງວນລິຂະສິດຂອງຜູ້ລິດຈະນາ

ພິມທີ່ໂຮງພິມ ດາວວິໄລ
ທະບຽນເລກທີ່ 35/ພຈ20072000
ຈຳນວນ2000 ເຫຼັ້ມ

**ສະໜັບສະໜູນໂຄງການໂດຍ:**
**The Albert Kunstadter Family Foundation**

# ຄຳນຳ

ຫຼານທີ່ຮັກທັງຫຼາຍ! ມາອີກແລ້ວ ນິທານແກ້ວ ຂອງທ້າວສຽວສະຫວາດ ວັດຊຽງທອງ. ຊຸດນີ້ແມ່ນຊຸດໃຫ້ຊື່ວ່າ "ນຸ່ງຜ້າລາຍໝາເຫົ່າ" ຂໍໃຫ້ພວກຫຼານຕັ້ງໃຈອ່ານໃຫ້ດີໆ ແລ້ວຫຼານຈະໄດ້ຄະຕິທັມຄຳສອນອັນປະເສີດ ທີ່ປູ່ຍ່າຕາຍາຍຂອງພວກຫຼານເອງ ໄດ້ແຕ່ງມາເປັນສິນບັດອັນລ້ຳຄ່າທາງສະຕິປັນຍາຂອງຊາດລາວເຮົາ. ເມື່ອອ່ານແລ້ວຂໍໃຫ້ພວກຫຼານທັງຫຼາຍຢ່າລືມເພື່ອນຂອງພວກຫຼານຜູ້ໜຶ່ງ ທີ່ບໍ່ໄດ້ມີໂອກາດມີຊີວິດຢືນຍົງໃນໂລກເຮົານີ້ຮ່ວມກັບພວກຫຼານ.ເຂົາຜູ້ນັ້ນຊື່ ທຸມນີວົງງ(ນຸດ) ລູກຊາຍນ້ອຍທີ່ຮັກຂອງລຸງນີ້ເອງ ແລະກໍ່ຢ່າລືມເພື່ອນໆຂອງພວກຫຼານ ຜູ້ຍັງຍາກເຂັນເອັນແຄ້ນຢູ່ຕາມຊົນນະບົດທີ່ຫ່າງໄກ ເຊິ່ງບໍ່ມີໂອກາດໄດ້ຮຽນໜັງສື ໄດ້ຂີ່ລົດ ໄດ້ສະໜຸກສຸກສະບາຍເໝືອນພວກຫຼານໆ ຜູ້ມີໂອກາດອັນດີກວ່າ. ຂໍໃຫ້ພວກຫຼານຈົ່ງຮັກແພງສາມັກຄີກັນ ຕັ້ງໃຈຮຽນໃຫ້ເກັ່ງມີສະຕິປັນຍາສູງເດັ່ນ ເປັນສັກສີແກ່ຊາດບ້ານເມືອງເຮົາເທີດ. ລຸງສຸພານຸວົງເພິ່ນສອນໄວ້ວ່າ : " ບໍ່ຮູ້ໃຫ້ຮຽນ ຮຽນເພື່ອຮູ້ ຮູ້ເພື່ອເຮັດ ບໍ່ຮູ້ຢ່າເຮັດ ເຮັດແລ້ວມັນຜິດ " ຈຳໄວ້.

ວັນທີ່ 6/7/2000

ຈາກລຸງ

# ນຸ່ງຜ້າລາຍໝາເຫົ່າ

ເມື່ອມະຫາບັນດິດທ້າວສຽວສະຫວາດໄດ້ຊັກເອົານິທານ "ເຮັດເປັນມີຈຶ່ງເຫັນໜ້າປ້າ ເຮັດບໍ່ເປັນມື ນ້ານ້ອງແມ່ກໍ່ເປັນເພີ່ນອອນຊອນ " ມາທູນຖວາຍພະຍາຈຳປານະຄອນ ພ້ອມດ້ວຍເສນາອາມາດ ແລະ ຊາວເມືອງອັນໄດ້ຮ້ອຍເອັດຫົວເມືອງແລ້ວ ພະອົງກໍ່ຊັກເອົານິທານບົດໃໝ່ ເຊິ່ງມີຫົວຂໍ້ວ່າ "ນຸ່ງຜ້າລາຍໝາເຫົ່າ ຄືນຄວາມເກົ່າມາເລົ່າ ຜິດກັນ" ໃຫ້ພະອົງຟັງພ້ອມດ້ວຍທ້າວຂຸນມຸນນາຍ ເສນາອາມາດ ແລະ ໄພ່ຟ້າຂ້າແຜ່ນດິນຂອງພະອົງໄດ້ຕຶກຕອງຕາມຄອງອັນຊອບ ຄວນປະກອບໃນສິ່ງທີ່ເປັນມຸງຄຸນກໍ່ມີໃນກາລະຄັ້ງນີ້ແລ.



# I. ບັ້ນພະຍາກິນຣຳ

ແຕ່ນັ້ນ ບັນດິດໂຕ ອັນວ່າສຽວສະຫວາດ ທຳມິກະບັນດິດ ຈັກກ່າວຍັງນິທານທີ່ວ່າ "ນຸ່ງຜ້າລາຍໝາເຫົ່າ ຄົ້ນຄວາມເກົ່າມາເລົ່າ ຜິດກັນ" ໃຫ້ເຈົ້າທັງຫຼາຍຕັ້ງໃຈຟັງ ແລະພາກັນຈຳໄວ້ໃຫ້ດີ. ແຕ່ກ່ອນພຸ້ນຍັງມີຍິງຄົນໜຶ່ງຢູ່ໃນເມືອງພະຣານະສີ ແມ່ຍິງຜູ້ນັ້ນມັນຍ່ອມປາກເປັນກວ່າເພິ່ນທັງຫຼາຍ ພວກຍາດຕິພໍ່ແມ່ພີ່ນ້ອງ ກໍ່ຢູ່ນຳບໍ່ໄດ້ ເພາະມີຄວາມວິວາດບໍ່ຂາດຈັກວັນ ເຂົາຜິດກັນເພາະມັນປາກກ້ຽງ ສ່ວນພໍ່ແມ່ກໍ່ເລີຍໜີໄປຢູ່ທີ່ອື່ນ ປະແຕ່ມັນຢູ່ຜູ້ດຽວ ມັນກໍ່ເລີຍເຮັດຫຼາຍອາດຫຼາຍແນວ ຢາກໃຫ້ເພິ່ນເວົ້າໃຫ້ໂຕກ່ອນ ທີຫຼັງມັນຈຶ່ງເວົ້າໃຫ້ເພິ່ນ ມື້ໜຶ່ງມັນເລີຍນຸ່ງຜ້າລາຍກາຍໄປບ້ານເພິ່ນໝາເຫັນຜ້າລາຍກໍ່ເລີຍເຫົ່າ ເຈົ້າໝາກໍ່ດ່າຍັງໝາ ສ່ວນມັນຜູ້ນັ້ນກໍ່ວ່າເພິ່ນດ່າມັນ ມັນກໍ່ຈັບເອົາຄວາມນັ້ນໄປຟ້ອງສານ ແລ້ວກໍ່ຖຽງເລວເອົາເຂົ້າຂອງແຫ່ງທ່ານ ເມື່ອມັນຫາກໄດ້ຕາມໃຈມັກຂອງມັນ ມັນກໍ່ພິປອງແປງອາດອື່ນໄປໃຫ້ເພິ່ນຫົວຂວັນມັນ ບາງທີເຂົາກໍ່ຕີ ບາງທີເຂົາກໍ່ດ່າ ບາງທີເພິ່ນກໍ່ຊີ້ໜ້າ ບາງທີເຂົາກໍ່ຕົບມືໃສ່ໜ້າມັນ ມັນກໍ່ພິປອງເອົາຍັງຄວາມເຂົາໄປຂຶ້ນສານ ແລ້ວມັນກໍ່ຖຽງເອົາເງິນຄຳທຸກວັນບໍ່ຂາດ. ສ່ວນຊາວບ້ານຝູງນັ້ນເຂົາກໍ່ເປັນຂ້າເສິກສັດຕູກັບມັນສູ່ຄົນ. ແຕ່ນັ້ນຄວາມກໍ່ລືຊາປາກົດໄປ



ເຖິງເຈົ້າແຜ່ນດິນຜູ້ປົກຄອງເມືອງພາຣານະສີທີ່ນັ້ນວ່າ ຍັງມີຍິງຄົນນຶ່ງປາກກົ້ງໜັກໜາຫາຜູ້ຈັກຜາບແພ້ບໍ່ໄດ້ຈັກຄົນ. ຣາຊາສ່ວນພະຍາກໍ່ໃຫ້ຄົນໄປທັນເອົາຍັງຍິງຜູ້ຊ່າງເວົ້ານັ້ນມາວ່າ ດຽວນີ້ພະຍາເຈົ້າໃຫ້ຂ້ອຍມາທັນເອົາເຈົ້າເມືອເຂົ້າເຝົ້າເພິ່ນດຽວນີ້. ສ່ວນຍິງຜູ້ນັ້ນກໍ່ຕອບວ່າ: "ລູງເຮີຍ ຂ້ອຍເປັນຜູ້ຍິງ ພະຍາເຈົ້າບໍ່ທ່ອນວ່າຈະຕ້ອງການເອົາຂ້ອຍຜູ້ຍິງເມືອເຂົ້າເຝົ້າ ແນວໃດຂ້ອຍກໍ່ບໍ່ເມືອ" ວ່າດັ່ງນີ້ຕອບຄົນໃຊ້ ສ່ວນຄົນໃຊ້ເຂົາກໍ່ກັບເມືອຕອບພະຍາ ພະຍາກໍ່ຈຳໃຫ້ຜູ້ໃໝ່ໄປທັນເອົາວ່າ: "ນ້າເຮີຍ ພະຍາເຈົ້າເພິ່ນຢາກເຫັນໜ້າເຈົ້າເພິ່ນໃຊ້ຂ້ອຍມາທັນເອົາເຈົ້າເມືອຫາເພິ່ນດຽວນີ້". ຍິງຜູ້ນັ້ນກໍ່ກ່າວວ່າ: "ອ້າຍຊຽງເຮີຍ ຂ້ອຍນີ້ບໍ່ແມ່ນສັດເປັນເຫງັນປ່າເຫດໃດພະຍາຈຶ່ງຢາກເຫັນໜ້າຂ້ອຍ ໆບໍ່ເມືອ" ວ່າດັ່ງນັ້ນ. ຄົນໃຊ້ກໍ່ກັບເມືອຄອບພະຍາ ພະຍາກໍ່ບອກຄົນໃໝ່ໄປອີກ ຄັນໄປຮອດກໍ່ວ່າ: "ໝ່ອມນ້າສາວເຮີຍ ພະຍາເພິ່ນໃຫ້ຂ້ອຍມາທັນເອົາເຈົ້າເມືອເປັນນາງເທວີ ເຈົ້າຈົ່ງຮີບເມືອນຳຂ້ອຍດຽວນີ້" ມັນກໍ່ຕອບຄົນໃຊ້ວ່າ: "ອ້າຍຊຽງ



ເຮີຍ ຂ້ອຍບໍ່ເຄີຍແກວ່ງພັດ ກວັດວີ ເຊື້ອຂ້ອຍບໍ່ເຄີຍເປັນນາງເທວີຫຽມເຈົ້າ ຂ້ອຍບໍ່ເມືອໄດ້ແລ້ວ" ຄົນໃຊ້ກໍໜີຄືນເມືອຄອບພະຍາ ພະຍາກໍ່ຄຶດຄຽດ ແລ້ວກໍ່ບອກໃຫ້ເຂົາໄປມັດເອົາມັນມາທັນທີ. ແລ້ວພະຍາກໍ່ເລີຍຖາມມັນວ່າ: "ອີ່ແມ່ຍິງດຽວກູໃຫ້ຄົນໄປທັນເອົາມຶງ ມຶງສັງບໍ່ມາດ້ວຍເຫດໃດ". ມັນກໍ່ທູນວ່າ: "ຂະນ້ອຍບໍ່ເຫັນໃຜໄປຫາຜູ້ຂ້າຈັກເທື່ອ" ພະຍາກໍ່ກ່າວວ່າ :

"ເປັນສັງມຶງຈຶ່ງບໍ່ເຫັນ ກູໃຫ້ມັນຜູ້ນັ້ນໄປ ມຶງຍັງວ່າບໍ່ເຫັນໃຜ". ເມື່ອນັ້ນຍິງຜູ້ນັ້ນ ມັນກໍ່ເລີຍວ່າ: "ຂ້າໄຫວ້ມະຫາຣາຊເຈົ້າ ຂະນ້ອຍບໍ່ເຄີຍໄດ້ຂັດຄໍາສັ່ງອົງພູະເຈົ້າແຜ່ນດິນ ແຕ່ຂະນ້ອຍບໍ່ໄດ້ຍິນໃຜໄປເອີ້ນ". ມັນກໍ່ມີປັນຍາອັນກ້າຫານບໍ່ຢ້ານບໍ່ຢໍາຍັງຜູ້ໃດຈັກຄົນ ແມ່ນແຕ່ພະເຈົ້າແຜ່ນດິນມັນກໍ່ຍັງຫຼິ້ນປັນຍາຕອບຢູ່ຈັ່ງຊັ້ນ ເພາະມັນເປັນຍິງປາກເປັນ ມັນປາກໃສ່ນໍ້າຢູ່ໝໍ້ກໍ່ໄຫຼ ປາກໃສ່ໄຟກໍ່ມອດ ພະຍາເຈົ້າກໍ່ເລີຍເອົາຍິງຜູ້ນັ້ນໄວ້ ແລ້ວບອກໃຫ້ຄືວຄະນາບຣໍາໃຫ້ພະຍາເຈົ້າສະເຫວີຍທຸກວັນ ແລ້ວພະຍາກໍ່ອານັດກັບມັນໄວ້ວ່າ: "ກູພະອົງສະເຫວີຍຣໍາ ມຶງ



ຢ່າໄດ້ໄປເວົ້າຕໍ່ບຸກຄະຣະຜູ້ໃດເນີ ຢ່າໃຫ້ຜູ້ໃດຮູ້ຈັກຄົນ ຖ້າຫາກຄວາມນີ້ເກີດມາເວລາໃດ ກູຈະໄດ້ເອົາມຶງໄປຂ້າ". ພະຍາກໍ່ອານັດຄວາມໄວ້ດັ່ງນີ້. ແຕ່ນັ້ນໄປສ່ວນວ່າອີປາກກ້ຽງຜູ້ນັ້ນມັນກໍ່ຄຶດຢາກເວົ້າຢາກລົມໃຫ້ຜູ້ອື່ນຟັງວ່າ ຕົນໄດ້ຄືວຄະນາບຣໍາໃຫ້ພະຍາເຈົ້າສະເຫວີຍ ແລ້ວມັນກໍ່ຄຶດຄັ່ງແຄ້ນແໜ້ນຫົວໃຈຢາກເວົ້າໃຫ້ໃຜຟັງກໍ່ບໍ່ໄດ້. ມື້ນຶ່ງມັນເລີຍເຂົ້າໄປໃນປ່າໃຫຍ່ດົງໜາ. ຣຸກຂັງຍັງມີໄມ້ດູ່ໃຫຍ່ຕົ້ນນຶ່ງຢູ່ໃກ້ແດນເມືອງທີ່ນັ້ນ ມັນກໍ່ເຂົ້າໄປໄຫວ້ເທວະດາຢູ່ຕົ້ນໄມ້ໃຫຍ່ທີ່ນັ້ນວ່າ:"ເທວະດາເຈົ້າຕົ້ນໄມ້ໃຫຍ່ເຮີຍ ພະຍາເຈົ້າເມືອງຕົນນີ້ບໍ່ໃສ່ພໍປະມານປານໃດ ຕັ້ງເປັນພະຍາຕົນໜັກຕົນໃຫຍ່ ເຫດໃດມາບອກຜູ້ຂ້າເຮັດຄະນາບຣໍາໃຫ້ໂຕກິນສູ່ມື້ ມັນຕັ້ງບໍ່ດີ ເປັນເຊື້ອກະສັດນັດຕາສັງເລີຍ". ມັນເວົ້າຕໍ່ເທວະດາຕົ້ນໄມ້ໃຫຍ່ດັ່ງນີ້ ແລ້ວມັນກໍ່

ຄືນມາສູ່ບ້ານແຫ່ງມັນ ກໍ່ມີໃນກະລະຄັ້ງນັ້ນແລ. ແຕ່ນັ້ນນານມາໄດ້ສາມເດືອນ ກອງຍາມພະຍາເຈົ້າເລີຍແຕກເສັຽ ຝູງໄທຍາມ ເຂົາກໍ່ຂຶ້ນຂາບທູນພະຍາວ່າ ກອງຍາມນັ້ນແຕກເສັຽແລ້ວ ພະຍາກໍ່ໃຫ້ຄົນທັງຫຼາຍໄປສ່ຽງເອົາ ຫາກເຫັນວ່າໄມ້ຕົ້ນໃດຄວນເປັນມັງຄະຣະກໍ່ຈິ່ງຟັນເອົາມາເທີ້ນ. ພະຍາສັ່ງເຂົາດັ່ງນັ້ນແລ້ວ ເຂົາກໍ່ໄປສ່ຽງເອົາ ກໍ່ໄດ້ໄມ້ຕົ້ນທີ່ຍິງຜູ້ນັ້ນໄປເວົ້າຕໍ່ເທວະດາໄວ້ນັ້ນ. ເຂົາກໍ່ຕັດສ້ອມແປງດີຊີຣູໄລໄວ້ພ້ອມແລ້ວກໍ່ຫາມເອົາມາ ພະຍາກໍ່ບອກໃຫ້ເຂົາ ຫຸ້ມແລ້ວບໍຣະບວນ. ໝໍກໍ່ຫາຍາມດີມື້ປອດ ຮອດນັກຄັດຕະຣືກຖືກໜ່ວຍຊື່ວ່າໂລຫິ



ນີ ເຂົາກໍ່ເອົາຂຶ້ນໄວ້ດີທີ່ເກົ່າ ແລ້ວເຂົາກໍ່ຕີກອງຍາມໜ່ວຍນັ້ນ ກໍ່ບໍ່ຄືສຽງກອງທັງຫຼາຍ ສຽງກອງໜ່ວຍນັ້ນ ກໍ່ດັງວ່າຮາໆ ເຂົາຕີໄປເທົ່າໃດກອງກໍ່ດັງເໝືອນເກົ່າ ພະຍາເຈົ້າກໍ່ໃຫ້ໄປຫັນເອົາມາຍັງບັນດິດນັກປາດ ຜູ້ສະຫຼາດມາຊ່ອຍພິຈາຣະນາຟັງສຽງກອງໜ່ວຍນັ້ນ ສ່ວນເສນາອາມາດນັກປາດປະໂລຫິດ ກໍ່ບໍ່ມີໃຜຄຶດຮູ້ຮອດຈັກຄົນ ຣາຊາອັນວ່າພະຍາກໍ່ໃຫ້ຫັນເອົາມາ

ຍັງໝໍຣູຣາຄູນທານເບິ່ງຣືກ ແຕ່ນັ້ນໝໍຣູຣາທານດູຮູ້ເສດ ເພິ່ນບອກເຫດໄວ້ໃນກຳພີນາມມະວັກ ແລ້ວກໍ່ຂາບໄຫວ້ທູນຖວາຍຕາມອາຈານວ່າ: " ອັງຄານນັ່ງແທ່ນກໍ່ມາໄດ້ຣືກແມ່ນຕາມເຄົ້າຣູຣາ ອາຈານບອກວ່າມີຍິງຄົນນຶ່ງເຂົ້າມາອານັດຈັດຕາມຈັນທະຣັກຄະນາ ມີຜູ້ຍິງໄປເວົ້າຕໍ່ແທ້ ນານມາໄດ້ເກົ້າສິບວັນ ຄັນຕາມເສດອັງຄານທໍຣະຄູນເຄົ້າ ເວົ້າວ່າໄດ້ສາມເດືອນນີ້ກໍ່ຂ້າແລ".ແຕ່ນັ້ນພະຍາກໍ່ຄຶດຮູ້ຕາມທີ່ໝໍຣູຣາທູນດັ່ງນັ້ນ ກໍ່ໃຫ້ເຂົາໄປທັນເອົາຍິງຜູ້ນັ້ນມາຖາມວ່າ : " ອັນຄວາມຣະຫັດຄະນາບຣານັ້ນ ມຶງເອົາໄປເວົ້າຕໍ່ຕົ້ນໄມ້ໃຫຍ່ ອັນກູໃຫ້ເຂົາເອົາມາແປງ ກອງນີ້ແທ້ລື?". ມັນກໍ່ຮັບວ່າໄດ້ເວົ້າແທ້ກໍ່ຂ້າແລ. ດັ່ງນັ້ນ ພະຍາຈຶ່ງບອກເພັດຊະຄາດເອົາຍິງຜູ້ປາກກ້ຽງນັ້ນໄປຂ້າໃນປ່າກາງໂຄກພຸ້ນ ກໍ່ມີໃນກາລະຄັ້ງນັ້ນ. ອັນນີ້ຊື່ວ່າ "ນຸ່ງຜ້າລາຍໝາເຫົ່າ ຄົ້ນຄວາມເກົ່າມາເລົ່າຜິດກັນ". ສຽວສະຫວາດທຳມິກະບັນດິດ ກໍ່ນຳເອົາມາທູນຖວາຍພະຍາຈຳປານະຄອນ ສອນຊາວເມືອງກໍ່ມີດັ່ງນີ້ແລ.



## II. ບັ້ນ ຜີຫົວຫລ້ອນ

ແຕ່ນັ້ນຍັງມີສາມະເນນໝູ່ໜຶ່ງໄປຫຼິ້ນປ່າ ເລີຍໄປພົບຜີຫົວຫຼ້ອນຢູ່ກາງໂຄກຫົວໜຶ່ງ. ສາມະເນນອົງນັ້ນຄຶດວ່າ "ອັດຕະມາຈັກເອົາຫົວຜີຫຼ້ອນນີ້ໄປຮອງຕີນສ້ວມອາບພະອາຈານ ໃຫ້ເພິ່ນເມດຕາເອົາມັນ ໃຫ້ໄດ້ເມືອສະເຫວີຍສຸກເທີ້ນ" ສາມະເນນຄຶດດັ່ງນີ້ແລ້ວ ກໍເອົາມາຝັງໄວ້ທີ່ຢ່ຳຂຶ້ນອາບພະອາຈານກໍ່ມີແລ ສ່ວນຍິງຜູ້ນັ້ນຄັນຕາຍກໍ່ເປັນເຜດຢູ່ກັບຫົວແຫ່ງມັນ ໃນບ່ອນຝັງໄວ້ສ້ວມອາບ ເປຕາອັນວ່າເຜດມັນກໍ່ໄປຮາວີວັດວາອາຮາມ ກະດີວິຫານທຸກວັນບໍ່ຂາດ ຍັງມີວັນນຶ່ງເຈົ້າພິຊຸກວັດເໜືອເລີຍພາກັນໄປຫຼິ້ນປ່າ ເອົາໄມ້ມາທຳກິດຈະການແຫ່ງຕີນສູ່ຄົນ ສ່ວນເຜດຕົວນັ້ນມັນກໍ່ເຫັນສາທຸວັດເໜືອເອົາໄມ້ມາໄວ້ ມັນກໍ່ໄປເວົ້າຕໍ່ພິຊຸກວັດໃຕ້



ໃນພໍທ່ຽງກາງຄືນວ່າ: "ສາທຸເຈົ້າໜ່ອມເຮີຍ ຄັນວ່ານອນກໍ່ຈົ່ງໄວ້ໃຈແດ່ ສາທຸວັດເໜືອເພິ່ນພ້ອມກັນສ້າງໄມ້ຄ້ອນໄວ້ສູ່ຕົນ ວ່າຈະມາຕີສາທຸວັດໃຕ້ວ່າດັ່ງນີ້ ຍັງບໍ່ຮູ້ເມື່ອຄີງເທື່ອລີ ? ຂະນ້ອຍອິນດູຈຶ່ງລັກມາບອກໃຫ້ພາກັນຫາໄມ້ຄ້ອນໄວ້ແດ່ເນີ". ເຜດຕົວນັ້ນຄັນເວົ້າແລ້ວມັນກໍ່ໜີໄປຫັ້ນແລ ເມື່ອເຈົ້າພິກຂຸວັດໃຕ້ໄດ້ຍິນສຽງເວົ້າອັນນັ້ນກໍພ້ອມກັນຕື່ນຂຶ້ນແລ້ວກໍ່ພາກັນໄປໄຫວ້ພະອາຈານວ່າ: "ຄືນນີ້ພໍທ່ຽງແມ່ນໃຜມາເວົ້າວ່າສາທຸເຮີຍ ນອນກໍ່ໄວ້ຈິດໄວ້ໃຈແດ່ ສາທຸວັດເໜືອເພິ່ນສ້າງໄມ້ຄ້ອນວ່າຈິມາຕີເຈົ້າພີ່ນ້ອງວັດໃຕ້ ຂະນ້ອຍຄຶດດູຕົນກໍ່ຟ້າວມາບອກນີ້ແລ້ວ ຈົ່ງລະວັງກັນໄວ້ໃຫ້ດີ" ພິກຂຸໄປໄຫວ້ພະອາຈານດັ່ງນີ້. ເມື່ອນັ້ນພະອາຈານກໍ່ວ່າ: " ໃຫ້ພາກັນຄອຍດູໄປກ່ອນເທີ້ນ ຖ້າຫາກເປັນດັ່ງຄວາມວ່າແທ້ ເຮົາກໍ່ຈົ່ງພ້ອມກັນໄປເອົາໄມ້ດູ່ໄມ້ແດງມາແປງຄ້ອນໄວ້". ພະອາຈານເວົ້າກັບລູກສິດດັ່ງນີ້ແລ້ວກໍ່ຄ້ອມພໍຮຸ່ງມາຫັ້ນແລ. ສ່ວນພິກຂຸວັດເໜືອກໍ່ພ້ອມກັນມາຖາກໄມ້ຢູ່ສູ່ຕົນ ແລ້ວເຈົ້າພິກຂຸວັດໃຕ້ກໍ່ມາຈອບເບິ່ງເຫັນວັດເໜືອຖາກໄມ້ຢູ່ ດັ່ງນັ້ນຈຶ່ງເວົ້າກັນວ່າ: "ຄໍາເຮົາເວົ້າກັນຄືນນີ້ກໍ່ມີແທ້ນໍ ເຮົາພາກັນໄປເອົາໄມ້ມາແປງຄ້ອນໄວ້ກ່ອນເທີ້ນ" ພິກຂຸວັດໃຕ້ເວົ້າກັນດັ່ງນີ້ແລ້ວ ກໍ່ພ້ອມກັນໄປພາເອົາຍັງໄມ້ດູ່ໄມ້ແດງ ໄມ້ໜັ້ນໄມ້ແຂງແມ່ນໄມ້ກະບົ້ມາກອງໄວ້ ມື້ນັ້ນ ພໍຕາເວັນຕໍ່າລົງທ່ຽງຄືນແລ້ວ ເຜດຕົວນັ້ນກໍ່ໄປຊິ່ມຕໍ່ເຈົ້າພິກຂຸວັດເໜືອວ່າ: "ສາທຸເຈົ້າໜ່ອມທັງຫລາຍ ນອນກໍ່ໃຫ້ໄວ້ໃຈແດ່ດຽວນີ້ວັດໃຕ້ເພິ່ນສ້າງໄມ້ຄ້ອນວ່າຈິມາຕີວັດເໜືອ ຜູ້ຂ້າຄຶດດູຕົນ ກໍ່ຈຶ່ງມາລັກເວົ້າຕໍ່". ເຜດ



ຕົວນັ້ນ ຄັນມັນເວົ້າແລ້ວ ກໍ່ໜີໄປທັ້ນແລ ເຈົ້າພິກຂຸວັດເໜືອພ້ອມກັນລຸກ ແລ້ວກໍ່ໄປໄຫວ້ພະອາຈານວ່າ:"ມື້ຄືນນີ້ພໍທ່ຽງຄືນໄດ້ຍິນສຽງເວົ້າວ່າ: "ສາທຸເຮີຍນອນກໍ່ໄວ້ໃຈແດ່ ວັດໃຕ້ເພິ່ນແປງຄ້ອນດ້າມ ວ່າຈິມາຕີວັດເຮົານີ້ ຂະນ້ອຍຄຶດດູຕົນກໍ່ມາເວົ້າຕໍ່ໃຫ້ຮູ້ເມື່ອຄືງໄວ້ວ່າດັ່ງນີ້ ຈັກແມ່ນໃຜກໍ່ບໍ່ຮູ້". ເມື່ອນັ້ນ ພູະອາຈານວັດເໜືອກໍ່ເວົ້າຕໍ່ລູກສິດວ່າ: "ຄັນເປັນດັ່ງຄຳເວົ້າ ມື້ອື່ນຫາກຈະເຫັນ". ຮຸ່ງມາເຈົ້າພິຂຸກວັດໃຕ້ກໍ່ພ້ອມກັນຖາກໄມ້ຄ້ອນສູ່ຕົນ ເມື່ອພິກຂຸວັດເໜືອມາເຫັນດູຕ່າງແທ້ແບບນັ້ນກໍ່ເວົ້າກັນວ່າ: "ຄຳມື້ຄືນນີ້ມີແທ້ນໍ ເຮົາຈິ່ງພ້ອມກັນຕຽມຕົວໄວ້ສູ່ຄືນເທີ້ນ". ແຕ່ນັ້ນພະວັດໃຕ້ ແລະ ພະວັດເໜືອກໍ່ບໍ່ເຂົ້າມໍ່ກັນຈັກເທື່ອ ມີແຕ່ຖືໄມ້ຄ້ອນໄປມາມ່າຍກັນຢູ່ ແຕ່ບໍ່ເຮັດສັງໃຫ້ກັນ ເຫດວ່າບໍ່ໄດ້ຜິດຖຽງກັນ ມີແຕ່ໄດ້ຍິນຄຳເວົ້າເປົ່າດາຍຊື່ໆ. ນານໄດ້ຫົກເຈັດວັນ ຊາວບ້ານກໍ່ໄດ້ມາພິຈາຣະນາກັນນຳສາທຸວັດວ່າ: "ການທີ່ເຈົ້າທັງຫຼາຍກະທຳນີ້ ດ້ວຍເຫດປະການໃດ". ເມື່ອນັ້ນພະອາຈານວັດເໜືອກໍ່ມາເລົ່າເຫດໃຫ້ຊາວບ້ານຟັງອັນຕົນໄດ້ຍິນມານັ້ນ ສ່ວນພູະອາຈານວັດໃຕ້ກໍ່ມາແຈ້ງໃຫ້ຊາວບ້ານວ່າ:"ເປັນດັ່ງຄຳສາທຸວັດເໜືອເວົ້ານັ້ນເຊັ່ນກັນ".ຊາວບ້ານກໍ່ມາສືບຫາສາເຫດທີ່ແທ້ຈິ່ງ ຈິ່ງສອບຖາມພິກຂຸສາມະເນນທຸກອົງວ່າ: "ຜູ້ໃດໄດ້ເອົາອັນໃດອັນນຶ່ງມາໄວ້ໃນວັດນີ້ແດ່ບໍ່". ເມື່ອນັ້ນອ້າຍຈົວຜູ້ເອົາຫົວຜີຫຼ້ອນມານັ້ນ ກໍ່ບອກພໍ່ອອກວ່າ: "ຂ້ອຍໄດ້ເອົາຫົວຜີຫຼ້ອນຢູ່ກາງໂຄກມາຝັງໄວ້ສ້ວມອາບພູະອາຈານ ຄຶດວ່າໃຫ້ມັນໄດ້ເມືອເກີດໃນເທວະໂລກມີຄວາມສຸຂີ ວ່າດັ່ງນີ້ ພໍ່ອອກເອີຍ". ແຕ່ນັ້ນຊາວບ້ານທັງຫຼາຍ ເຂົາກໍ່ພ້ອມກັນຂຸດເອົາຫົວຜີຫຼ້ອນໄປຖິ້ມເສັ້ຽບ່ອນເກົ່າ ສ່ວນພະສົງວັດເໜືອ ແລະ ວັດໃຕ້ ກໍ່ພ້ອມກັນຊົມຊື່ນຍິນດີດັ່ງເກົ່າ ກໍ່ມີໃນກາລະຄັ້ງນັ້ນແລ.



## III. ບັ້ນຫ້າງທ້ອງໄວ້ກິນໄຂ່ແລນ

ເມື່ອຜີຫິວຫຼ້ອນອັນນັ້ນຕົກໄປຢູ່ໃນປ່າເລິກເຊັ່ນເດີມແລ້ວ ມັນກໍ່ເລີຍກາຍເກີດເປັນເຕົ່າຄໍາຢູ່ໃນໂລກ ອັນຫາສິ່ງຈັກກິນກໍ່ບໍ່ມີ ມີແຕ່ອ້າປາກຕາກທ້ອງຢູ່ຍັ່ງນີ້. ມື້ໃດມີມົດແລະປວກມາຕອມປາກແຫ່ງມັນແລ້ວ ມັນກໍ່ສວາບກິນບໍ່ພໍອີ່ມປາກອີ່ມທ້ອງຈັກມື້. ວັນໜຶ່ງມັນຫຼຽງເຫັນລີງກິນໝາກໄມ້ຢູ່ປາຍຕົ້ນໄມ້ໃຫຍ່ຕົ້ນໜຶ່ງເຕົ່າເລີຍເອີ້ນໃສ່ລີງວ່າ: "ເຈົ້າເພື່ອນສະຫາຍເຮີຍ ເອົາໝາກໄມ້ອັນແຊບຊ້ອຍນັ້ນຖິ້ມມາໃຫ້ຂ້ອຍກິນແດ່ທ້ອນ ແລ້ວຂ້ອຍຈິ່ບອກຂຸມໄຂ່ແລນໃຫ້ເຈົ້າກູໄປກິນ".ເມື່ອລີງໄດ້ຟັງຄວາມນີ້ກໍ່ຫວັງຈິໄດ້ກິນໄຂ່ແລນ ເລີຍເອົາໝາກໄມ້ຖິ້ມໃຫ້ເຕົ່າກິນຈົນອີ່ມ ແລ້ວເຕົ່າກໍ່ຄານກ່ອງແກ່ງໜີໄປ ສ່ວນລີງກໍ່ຄຶດວ່າຈິໄດ້ກິນໄຂ່ແລນ ມັນເລີຍນໍາເຕົ່າໄປ ເຕົ່າໄປທາງໃດ ລີງກໍ່ໄປນໍາຢູ່ຈັ່ງຊັ້ນຈົນອິດເມື່ອຍ ຈິ່ງຖາມເຕົ່າວ່າ: "ເຈົ້າຈິໃຫ້ຂ້ອຍກິນໄຂ່ແລນນັ້ນຢູ່ບ່ອນໃດ". ເຕົ່າເລີຍຕອບວ່າເຈົ້າພໍ່ຄຸນເຮີຍ ດຽວນີ້ຂ້ອຍກໍ່ກໍາລັງຊອກຂຸມໄຂ່ແລນນັ້ນຢູ່ບໍ່ທັນຈອບເທື່ອ ຈັກໜ່ອຍຫາກຈະໄດ້ກິນ ຂໍໃຫ້ເຈົ້າເອົາໝາກໄມ້ມາໃຫ້ຂ້ອຍກິນຕື່ມແດ່ ຂ້ອຍຫິວແລ້ວ ແລ້ວຂ້ອຍຈິຊອກຕໍ່ໃກ້ຈະຮອດບ່ອນແລ້ວ" ເຕົ່າຕົວະໃຫ້ລີງເອົາໝາກໄມ້ໃຫ້ກິນຢູ່ຈັ່ງຊັ້ນ ຍ້ອນຄອງກິນໄຂ່ແລນນໍາເຕົ່າ. ໃນທີ່ສຸດເມື່ອມັນກິນອີ່ມພໍໆແລ້ວ ກໍ່ມະທັບມະຫາຍໄປຢ່າງບໍ່ຮູ້ສິ້ນທາງມັນເລີຍ. ນິທານບັ້ນນີ້ເພິ່ນຮຽກວ່າ: "ຫ້າງທ້ອງໄວ້ກິນໄຂ່ແລນ".



# IV. ບັ້ນຫົງຫາມເຕົ່າ



ເມື່ອເຕົ່າຫລົບໜີລີງຜູ້ທີ່ເຊື່ອວ່າຈິໄດ້ກິນໄຂ່ແລນນຳເຕົ່ານັ້ນມາຮອດໄລຍະໜຶ່ງ ເຕົ່າເລີຍໄປພໍ້ຫົງສອງຜົວເມັຽຈັບຢູ່ເທິງງ່າໄມ້ ພັກຜ່ອນເອົາແຮງ. ເມື່ອໂອກາດມີດັ່ງນັ້ນ ເຕົ່າເລີຍຮີບເອີ້ນໃສ່ຫົງວ່າ: "ດູລາເຈົ້າສະຫາຍທັງສອງເອີຍ ! ພວກທ່ານໄປສັງຈຶ່ງມາຢູ່ທີ່ນີ້ຈາ". ຫົງຕອບວ່າ: "ຕູທັງສອງໄປເລາະທ່ຽວຫາກິນມາ ເຈົ້າກູມີທຸຣະອັນໃດນີ້ຈາ ຈຶ່ງມາພໍ້ກັນນະທີ່ນີ້". ເຕົ່າຮີບຕອບໄປວ່າ:"ຂ້ອຍໄປຊອກຫາບຶງບ່ອນມີປູປາອາຫານເພື່ອຈະແປງຮັງອອກໄຂ່ ຫາກເຈົ້າກູທັງສອງພາຂ້ອຍໄປໄດ້ ຂ້ອຍຈະແບ່ງໄຂ່ຂອງຂ້ອຍໃຫ້ເຈົ້າກູທັງສອງກິນທ່ອງໜຶ່ງ". ເມື່ອນັ້ນ ຫົງເລີຍຖາມວ່າ: "ເຮັດຈັ່ງໃດພວກເຮົາຈຶ່ງຈະເອົາທ່ານໄປໄດ້ ມີວິທີດຽວທໍ່ນັ້ນ ຄືຕູທັງສອງຈະພີປອງຫາມເອົາເຈົ້າໄປ ແຕ່ກໍ່ມີຂໍ້ຫ້າມອັນໜຶ່ງ ທີ່ເຈົ້າຕ້ອງປະຕິບັດ". ຫົງບິນໄປ

ຊອກຄາບເອົາໄມ້ມາໄດ້ກິ່ງໜຶ່ງ ແລ້ວກໍ່ເວົ້ານຳເຕົ່າຕໍ່ວ່າ: "ໃຫ້ເຈົ້າເອົາສົບຄາບໄມ້ນີ້ໄວ້ໃຫ້ແໜ້ນ ແລ້ວຕູທັງສອງຈະຫາມເຈົ້າບິນໄປ. ຂໍ້ຫ້າມທີ່ເຈົ້າຄວນປະຕິບັດນັ້ນກໍ່ຄືວ່າ: ຄັນໄປຮອດບ້ານໃດເມືອງໃດ ມີໝາເຫົ່າແລະຄົນຫ້ອງ ເຈົ້າຢ່າປາກຢ່າຕິງເທີ້ນ". ຫົງບອກທັງສັນຍານຳເຕົ່າດັ່ງນີ້ແລ້ວ ເຕົ່າກໍ່ເຂົ້າຄາບທາງກາງໄມ້ ຫົງສອງຕົວກໍ່ຄາບຄົນລະສົ້ນ ແລ້ວກໍ່ບິນໄປຮອດເມືອງໜຶ່ງເຊິ່ງຜູ້ມາເຕົ້າໂຮມທຳມັງຄະຣະແກ່ກັນ ຝູງໝາກໍ່ມາເປັນຈຳນວນຫລາຍເຊັ່ນກັນ. ພໍໝາເຫັນຫົງຫາມເຕົ່າບິນມາ ໝາກໍ່ເຫົ່າແຫງນໜ້າຂຶ້ນເມື່ອບິນສູ່ຕົວ ເມື່ອນັ້ນຄົນກໍ່ເຫັນ ເຂົາກໍ່ພາກັນໂຮ່ຮ້ອງ ຕົບມືພິຜ້າໃສ່ວ່າ: "ເບິ່ງແມ້ຫົງຫາມເຕົ່າ - ຫົງຫາມເຕົ່າ" ຫມົດສູ່ຄົນກໍ່ພ້ອມກັນວ່າດັ່ງນີ້. ສ່ວນເຕົ່ານັ້ນ ເມື່ອໄດ້ຍິນຄົນຫ້ອງດັ່ງນັ້ນ ມັນກໍ່ຄຶດວ່າ ກູໄດ້ຫາບຫົງມາປານນີ້ ເຫດໃດມາວ່າຫົງຫາມເຕົ່າ ເຂົາພວກນີ້ຈັ່ງແມ່ນຂີ້ບໍ່ຮູ້ວ່າ ກູນີ້ຫາບຫົງມາແທ້ນໍ. ກູຈັກບອກໃຫ້ເຂົາຮູ້ວ່າກູນີ້ແຫລະຫາບຫົງມາ". ວ່າດັ່ງນີ້ແລ້ວເຕົ່າກໍ່ເລີຍອ້າປາກວ່າຈະເວົ້າ ແລ້ວກໍ່ເລີຍຕົກລົງມາຖືກຫູ້ກຕໍ ແລະຫີນ ຄົນທັງຫລາຍກໍ່ພ້ອມກັນຕີເຕົ່າ ອອງແຕກເລີຍຕາຍໄປ. ສ່ວນຂີ້ແລະເລືອດເຕົ່າກໍ່ຟົ້ງໄປຖືກຝູງຄົນເຫຼົ່ານັ້ນທຸກໆຄົນເຂົາກໍ່ເອົາໃບພູມາເຊັດຂີ້ເຕົ່າອອກຈາກຄີງເຂົາ. ສ່ວນຂີ້ເຕົ່ານັ້ນກໍ່ຕິດຢູ່ສອງກົກແຂນ ຄົນຝູງນັ້ນກໍ່ຈຶ່ງເຫມັນຂີ້ເຕົ່າປາງນັ້ນສືບມາເຖິງກາລະບັດນີ້. ສ່ວນຫົງທັງສອງຕົວນັ້ນຄຶດວ່າຈີໄດ້ກິນໄຂ່ເຕົ່າແທ້ທີ່ຈິງເຕົ່ານັ້ນບໍ່ມີໄຂ່ໃນທ້ອງມັນຈັກໜ່ວຍເລີຍ ມັນຍິວະໃຫ້ຫົງຫາມມັນໄປຕາຍ ກໍ່ມີກາລະຄັ້ງນັ້ນແລ. ອັນນີ້ໄດ້ຊື່ວ່າ "ຫ້າງທ້ອງໄວ້ກິນໄຂ່ເຕົ່າເປົ່າດາຍ" ແລ້ວຂີ້ເຕົ່າ ແລະເລືອດເຕົ່າກໍ່ບັງເກີດໃຫ້ເຂົາເປັນພະຍາດຂີ້ກາກ ຂີ້ກຸ້ງນ ຂີ້ຫິດ ຂີ້ເຕົ່າເມິກປານເກີດເປັນປານດຳ ປານແດງ ຫມໍກໍ່ແຫງຢາໃສ່ ບໍ່ຖືກປາງນັ້ນສືບມາເຖິງກາລະບັດນີ້. ແຕ່ນັ້ນໝາກໍ່ມາຄາບເອົາກະດູກ ແລະ ອອງເຕົ່ານັ້ນໄປທົ່ວທັງເມືອງ ຕົກຢູ່ໄຮ່ ຢູ່ນາ ຢູ່ສວນໃຜກໍ່ເກີດເປັນຄວາມດ້ວຍກະດູກເຕົ່າຂອງຕົວນັ້ນແລ້ວພາກັນຍາດແດນໄຮ່ ແດນນາ ແດນບ້ານ ແດນສວນ ເປັນຄວາມວິວາດຕິດແປດກັນສືບໆມາເຖິງກາລະບັດນີ້ແລ.

ນິທານເລື່ອງນາງປາກເປັນນີ້ ນັບວ່າເປັນຄະຕິຄຳສອນເລື່ອງວາຈີກັມ ຄືວ່າເປັນຄົນຢ່າໄດ້ສັບຊໍ່ກໍ່ໂທດ ເທວະດາບໍ່ໂຜດຕັ້ງໄປໄໜ້ຢູ່ອາເວຈີ ໄດ້ແກ່ຍິງຊາຍໃດບໍ່ຈຽມສືບຈຽມປາກ ກໍ່ຈະຕົກຢູ່ໃນກໍລະນີ ຄຳສອນທີ່ວ່າ: "ໝໍ້ນະຣົກມັນຢູ່ໃນໃຈ ຫມໍ້ໄຟແດງມັນຢູ່ໃນປາກ ຫມໍ້ທຸກຍາກມັນຢູ່ໃນມື".

# ເລື່ອງຜີຕາແຮກ

ແຕ່ກີ້ແຕ່ກ່ອນຍັງມີກະດຸມພິດອັນວ່າຊາວນາຄູ່ໜຶ່ງເຊິ່ງຜັດແຕ່ເອົາກັນມາໄດ້ຫຼາຍຟ້າມາປີ ຜູ້ເປັນເມັຽກໍ່ບໍ່ສາມາດມີລູກເຕົ້ານຳເພິ່ນຈັກຄົນ. ຜູ້ເປັນຜົວເຫັນວ່າເມັຽຕົນກາຍເປັນແມ່ເປົ່າ ບໍ່ສາມາດຈະມີລູກສືບຫນໍ່ແທນແນວໄດ້ນຳເພິ່ນກໍ່ເລີຍເວົ້າຂໍອະນຸຍາດເອົາເມັຽນ້ອຍນຳເມັຽໂດຍດີ ຫາກໄດ້ລູກເຕົ້າມາກໍ່ຈະເປັນຜູ້ສືບມູນມໍລະດົກ ແລະເປັນທີ່ເພິ່ງພາອາໄສເວລາເຖົ້າແກ່ໂຮຍແຮງຕໍ່ໄປ. ຜູ້ເປັນເມັຽພິຈາລະນາແລ້ວເຫັນວ່າ ຜົວມີເຫດຜົນທີ່ດີ ຈຶ່ງຕົກລົງປົງໃຈໃຫ້ຜົວໄປຊອກຫາຍິງຜູ້ຖືກໂສກຖືກວາດສະໜາທີ່ດີເພື່ອມາເປັນເມັຽນ້ອຍ. ທັງສອງເມັຽນ້ອຍຫຼວງຢູ່ນຳກັນມາຢ່າງຖືກນິໄສໃຈຄໍ ແລະຮັກແພງກັນຢ່າງດີ ໂດຍທີ່ບໍ່ເຄີຍໄດ້ຜິດຂ້ອງຕ້ອງຖຽງ ແລະທະເລາະວິວາດກັນແຕ່ຢ່າງໃດເລີຍ.



ຢູ່ມາເມັຽນ້ອຍເລີຍມີທ້ອງ ແລະທ້ອງກໍ່ຕັ້ງຂຶ້ນຕາມການເວລາທຸກມື້ທຸກເດືອນ. ຜູ້ເປັນຜົວເຫັນເມັຽນ້ອຍມີລູກແລ້ວ ກໍ່ມີຄວາມປິຕິຊົມຊື່ນ ພ້ອມທັງຫາເວລາຫວ້າງປະຄັບປະຄອງເມັຽນ້ອຍຫຼາຍຂຶ້ນ. ຜູ້ເປັນເມັຽຫຼວງເຫັນດັ່ງນັ້ນ ກໍ່ຮູ້ສຶກຕໍ່າຕ້ອຍນ້ອຍໃຈໃນຄວາມອາພັບ

ຂອງຕົນ ທີ່ບໍ່ສາມາດມີລູກນ້ອຍມາໃຫ້ຜູ້ເປັນຜົວຊື່ນຊົມໄດ້. ລາວມີຄວາມທຸ່ອມເທງົາກິນເຂົ້າບໍ່ລຳກິນນໍ້າບໍ່ແຊບຮ່າງກາຍຈ່ອຍຜອມ ແນວຄຶດຮ້ອຍແປດ ມາສິບລະວົນຢູ່ໃນສະໝອງຂອງລາວ ເຮັດໃຫ້ອຸກອັ່ງຄັ່ງຫວງ ກາຍເປັນທິ່ງຫວງ ແລະອາຄາດ. ລາວຄຶດວ່າເມື່ອລູກເມັ້ງນ້ອຍເກີດມາແລ້ວ ຄວາມຮັກຄວາມຫ່ວງຂອງຜົວ ກໍ່ຈະໄປຖົມເຖໃສ່ລູກເມັ້ງນ້ອຍແລະແມ່ຂອງມັນໝົດ. ສ່ວນຕົວເອງກໍ່ຈະໂດດດ່ຽວປ່ຽວພອຍ ຂາດທັງຄວາມເອົາໃຈໃສ່ ຂາດທັງຄວາມອົບອຸ່ນ ແຖມເມື່ອລູກເມັ້ງນ້ອຍໃຫຍ່ມາ ກໍ່ຈະຄອບຄອງສົມບັດທີ່ສ້າງ ແລະສະສົມມາໄດ້ນຳກັນທັງໝົດ. ເມື່ອຄຶດມາຮອດບ່ອນນີ້ແລ້ວເມັ້ງຫຼວງຮູ້ສຶກຫູອື້ງຕາມົວ ໃຈຫວຸ້ນວາຍດ້ວຍຄວາມເຈັບແຄ້ນ ຈຶ່ງຄຶດແກ້ຄວາມແຄ້ນຂອງຕົນດ້ວຍວິທີທັງປວງ. ເມື່ອທ້ອງເມັ້ງ ນ້ອຍໄດ້ສິບເດືອນໃກ້ຈະຄອດແລ້ວ ເມັ້ງຫຼວງກໍ່ຫາວິທີເອົາຢາຮ້າຍໃຫ້ເມັ້ງນ້ອຍກິນ ໂດຍຈອບອອຍວ່າ ຈະຊ່ວຍໃຫ້ມີແຮງດີ ແລະເກີດລູກງ່າຍຂຶ້ນ. ເມື່ອເມັ້ງນ້ອຍກິນຢາພິດນັ້ນເຂົ້າໄປແລ້ວ ກໍ່ເຈັບປວດເຫຼືອທີ່ສຸດຈົນສະຫຼົບໄປ ແລ້ວຈັກໜ່ອຍກໍ່ຟື້ນຄືນມາອີກ. ນາງຮູ້ວ່າເມັ້ງຫຼວງໄດ້ເອົາຢາພິດໃຫ້ຕົນກິນ ແລະກໍ່ຕ້ອງຕາຍແນ່ນອນ ນາງຈຶ່ງປາຖະໜາວ່າຂໍໃຫ້ໄດ້ຂ້າເມັ້ງຫຼວງນັ້ນເປັນການແກ້ແຄ້ນຄືນໃນຊາດໜ້າ. ແລ້ວເມັ້ງນ້ອຍກໍ່ຕາຍເກີດເປັນແມວຢູ່ໃນເຮືອນຫຼັງໜຶ່ງ. ເມັ້ງຫຼວງກໍ່ຕາຍໄປໃນເວລາຕໍ່ມາເຊັ່ນກັນ ແລ້ວເກີດເປັນໄກ່ໄປຢູ່ຮ່ວມຫຼັງຄາດຽວກັນກັບແມວໂຕນັ້ນ.

ຕົກນານມາ ໄກ່ກໍ່ໄຂ່ ແລະຟັກໄຂ່ ແລ້ວແມວເຈົ້າອາຄາດ ກໍ່ໄປກິນໄກ່ ແລະໄຂ່ມັນ



ເສັງຈົນໝົດ. ເມື່ອແມວໂຕນັ້ນຕາຍໄປອີກ ເລີຍເກີດເປັນກວາງ ສ່ວນໄກ່ແມ່ໂຕນັ້ນ ເລີຍເກີດເປັນເສືອຢູ່ດົງດຽວກັນ ເມື່ອເສືອອອກທ່ຽວຫາກິນ ກໍ່ເລີຍໄປພົບກວາງ ແລ້ວເສືອກໍ່ເລີຍກິນກວາງໂຕນັ້ນເສັງ. ເມື່ອເຖິງຄາວທີ່ເສືອໂຕນັ້ນຕາຍໄປແລ້ວ ເລີຍກາຍເກີດເປັນຍິງຄົນໜຶ່ງໃຫຍ່ຂຶ້ນມາກໍ່ໄດ້ຜົວເປັນຄູ່ ພາກັນໄປຢູ່ສ້າງເຮັດໄຮ່ກະທຳສວນ. ສ່ວນວ່າກວາງໂຕນັ້ນຕາຍໄປແລ້ວ ເລີຍເກີດເປັນຍັກຢູ່ໃນປ່າທີ່ນັ້ນ. ແຕ່ນັ້ນຍິງຜູ້ເຄີຍເປັນເມັຽຫຼວງກໍ່ເລີຍມີທ້ອງ ເມື່ອຮອດຂວບຮອດເດືອນມາແລ້ວກໍ່ເກີດລູກຄຳເດືອນ. ແຕ່ນັ້ນມາຍັກໂຕນັ້ນ ມັນກໍ່ກັບເພດເປັນຜູ້ສາວ ອອກມາທຳທ່າທຳທາງຮູ້ຈັກກັບນາງແມ່ຄຳເດືອນນັ້ນ ແລ້ວກໍ່ຂໍອູ້ມຈູບຊົມລູກຂອງນາງ ເມື່ອໄດ້ລູກນ້ອຍມາອູ້ມຈູບຊົມແລ້ວ ມັນກໍ່ສວາບລືນລູກອ່ອນນັ້ນເຂົ້າໄປໃນທ້ອງເສັງ. ເມື່ອເຫັນດັ່ງນັ້ນ ສອງຜົວເມັຽເລີຍພາກັນໜີ ແລ້ວຍັກຄີນີກໍ່ໂຕນເຂົ້າປ່າໄປ. ຢູ່ຕໍ່ມາຂາສອງຜົວເມັຽເລີຍມີລູກນຳກັນອີກ ເມື່ອໄດ້ຂວບໄດ້ເດືອນແລ້ວ ຜູ້ເປັນເມັຽເລີຍໄປລີ້ເກີດລູກຢູ່ນຳເຮືອນພໍ່ປູ່ ຈົນປອດໄພທຸກຢ່າງ ແລ້ວທັງສອງຜົວເມັຽຈຶ່ງພາກັນອູ້ມລູກກັບມາເຮືອນສ່ວນວ່າຍັກຄີນີ ມັນເລີຍກັບເພດເປັນສາວງາມເອ້ຍ້ອງ ຍ່າງອອກໄປຫາຜົວເມັຽຄູ່ນັ້ນ ພ້ອມທັງປາກເວົ້າອ່ອນຫວານໃສ່ວ່າ ຂໍອູ້ມລູກນ້ອຍນຳເຈົ້າແນ່ທ້ອນ. ເມື່ອສອງຜົວເມັຽເຫັນດັ່ງນັ້ນເຂົາເລີຍຢ້ານກົວ ແລ້ວກໍ່ເລີຍ ພາກັນອູ້ມເອົາລູກນ້ອຍແລ່ນເຂົ້າໄປໃນວັດ ເຊຕະວັນ. ສ່ວນວ່າ



ຍັກມັນກໍ່ແລ່ນໄລ່ຂາທັງສອງເຂົ້າໄປໃນວັດທັ້ນນຳເຊັ່ນກັນ. ແຕ່ນັ້ນສັບພັນຍູເຈົ້າທີ່ຈຳສິນຢູ່ໃນວັດຫຼິງເຫັນເຫດການດັ່ງກ່າວ ກໍ່ເລີຍຖາມວ່າ:

"ສູທັງຫຼາຍນີ້ ພາກັນແລ່ນເຂົ້າມາໃນອານາເຂດຂອງເຮົາພະອົງນີ້ເຮັດສັງຈາ" ສອງຜົວເມັຽເລີຍທູນພະອົງວ່າ:

"ພັນເຕຂ້າໄຫວ້ສັບພັນຍູເຈົ້າ ຂ້ານ້ອຍທັງສອງນີ້ກໍ່ມີຄວາມຢ້ານກົວຍັກໂຕນີ້ ທີ່ອອກໄລ່ກິນລູກຂອງຕູຂ້ານ້ອຍຈຶ່ງໄດ້ພາກັນແລ່ນມາເພິ່ງປາຣະມີ ແຫ່ງພະພຸດທະເຈົ້າກໍຂ້າແລ". ເມື່ອຮູ້ດັ່ງນັ້ນແລ້ວພະພຸດທະອົງ ເລີຍເທສະໜາໃຫ້ທັງຍັກແລະ ທັງຂາຜົວເມັຽທັງສອງວ່າ:

" ສູທັງຫຼາຍຫາກຜູກກຳກັນໄວ້ມາແຕ່ໃນກາລະເມື່ອກ່ອນເຊິ່ງໄດ້ຜັດປ່ຽນກັນກິນເຊິ່ງກັນແລະກັນມາຈົນເຖິງບັດນີ້. ຕັ້ງແຕ່ນີ້ຕໍ່ໄປຂໍໃຫ້ສູຈົ່ງຮັກສາສິນຫ້າເປັນນິດ ຫາກຈັກຫາຍກຳເວນແຫ່ງສູທັ້ນແລ". ເມື່ອນັ້ນຍັກຄືນີກໍ່ຖາມພະພຸດທະອົງວ່າ ອັນສິນຫ້ານັ້ນເປັນປະການໃດ. ພະພຸດທະອົງເລີຍເທສໜາໃຫ້ຍັກຟັງວ່າ:



" ອັນວ່າສິນຫ້ານີ້ເປັນຄອງອັນປະເສີດ ກວ່າໂລກທັງຫຼາຍແທ້ດີຫຼີແລ". ຜູ້ໃດບໍ່ຂ້າສັດຮຽກວ່າ "ເມດຕາ" ແຕ່ຖ້າຂ້າສັດມາກິນຮຽກວ່າ "ພີ່ຕາຍນ້ອງຍັງ" ເພາະເຂົາໄດ້ພັດພາກຈາກກັນໄປ ຜູ້ໃດບໍ່ລັກເອົາຂອງຄົນອື່ນ ຮຽກວ່າ "ກະຣຸນາ" ຖ້າລັກຂອງຄົນອື່ນຮຽກວ່າ "ເຮືອໄຫຼ

ທ່າຍັງ" ດ້ວຍເຫດວ່າເຂົາຜູ້ນັ້ນ ໄດ້ພັດພາກຈາກເຂົ້າຂອງແຫ່ງຕົນ ບຸກຄະລະຜູ້ໃດບໍ່ກະທຳມິດສາຈານກັບຜົວຫຼືເມັຽທ່ານ ໄດ້ຊື່ວ່າ "ມຸທຸຕາ" ແຕ່ຖ້າຫາກກະທຳມິດສາຈານແລ້ວ ໄດ້ຊື່ວ່າ "ນ້ຳເຕົ້າຈົມຫີນຟູ" ຜູ້ໃດບໍ່ມີມຸສາວາດຄືບໍ່ຕົວະບໍ່ລ່າຍ ກໍ່ໄດ້ແກ່ "ອຸເປກຂາ" ຄັນວ່າໄດ້ຕົວະລ່າຍແລ້ວກໍ່ໄດ້ຊື່ວ່າ "ນ້ຳເຕົ້າແຕກສາຍຍັງ" ທັງໝົດນີ້ຖ້າຫາກບໍ່ລະເວັ້ນແລ້ວກະທຳໄປກໍ່ຈະເປັນບາບກຳ ຄືຈະຕົກໄປວິບາກໄກຊົ່ວຊາດຊົ່ວເຊັ່ນຄື ນະຣົກອະເວຈີຫັ້ນແລ".

ເມື່ອຍັກຄືນີໄດ້ຟັງທັມມະຂອງພະພຸດທະເຈົ້າແລ້ວເຂົາກໍ່ມີຈິດໃຈຊົມຊື່ນຍິນດີ ປະຕິບັດຕົນຢູ່ໃນສິນກິນໃນທັມຕັ້ງແຕ່ນັ້ນມາ. ສ່ວນສອງຜົວເມັຽນັ້ນເມື່ອໄດ້ຟັງທັມມະເທສໜາຂອງພະພຸດທະເຈົ້າແລ້ວ ກໍ່ດີອົກດີໃຈເຊັ່ນກັນ. ຕັ້ງແຕ່ນັ້ນມາຍັກແລະສອງຜົວເມັຽກໍ່ມີຄວາມຮັກແພງກັນ. ພະພຸດທະເຈົ້າບອກໃຫ້ຍັກ ເປັນຜູ້ສິດສອນຕຳລາ ການເຮັດໄຮ່ກະທຳນາໃຫ້ຂາສອງຜົວເມັຽນັ້ນ ແລ້ວພວກເຂົາສອງຜົວນັ້ນກໍ່ໄດ້ເຂົ້ານ້ຳປັດໄຈມາເລົ້າມາເຍັຽ ແລ້ວພະພຸດທະອົງຍັງບອກໃຫ້ເຂົາສອງຜົວເມັຽອຸປະຖາກຮັກສາຍັກນັ້ນໄວ້ ແລ້ວພວກເຂົາກໍ່ຮັ່ງມີເປັນດີດ້ວຍເຂົ້າຂອງເງິນຄຳຫຼວງຫຼາຍ ເມື່ອຊາວບ້ານເຫັນດັ່ງນັ້ນ ຈຶ່ງມີຄວາມຍິນດີດອມຜົວເມັຽຄູ່ນັ້ນ ຈຶ່ງແຕ່ງໃຫ້ເປັນພໍ່ບ້ານນຳພາຊາວບ້ານ ອຸປະຖາກຍັກໂຕນັ້ນແລ້ວພາກັນເຮັດໄຮ່ກະທຳນາ ກໍ່ຈຶ່ງໄດ້ເຂົ້າມາເລົ້າມາເຍັຽ ມູນມາກເຊັ່ນກັນ. ແຕ່ນັ້ນ ຍັກຈຶ່ງບອກຊາວບ້ານທຸກຄົນໃຫ້ປຸກຕູບຫໍແຮກໄວ້ກາງນາ ສ່ວນຕາແຫຼວປັກໄວ້ສີ່ດ້ານ ແລ້ວຍັກກໍ່ບອກຄວາມເຂັດຢໍາໃຫ້ວ່າ:

"ດູລາຕາແຫຼວ ຈົ່ງນຳເອົາເຂົ້າມາໃສ່ນາເອົາປາມາໃສ່ຕ້ອນ ຖົ່ວໃຫ້ຍາວດີ ປີໃຫ້ຍາວກວ້າງ ຈົ່ງໃຫ້ເຂົ້າຖ້ວມຫຼັງຊ້າງຫຼັງມ້ານີ້ເນີ". ນິທານເລື່ອງຜີຕາແຮກທີ່ພໍ່ແມ່ເຮົາພາກັນປະຕິບັດມາຈົນເຖິງເທົ້າທຸກວັນກໍ່ມີທໍ່ນີ້ແລ.



# ນົກໄຊ່ ແລະ ຊ້າງສານ

ຍັງມີນົກໄຊ່ນ້ອຍສອງຜົວເມັຽພາກັນເຮັດຮວງຮັງຢູ່ດອມກັນໃນປ່າແຫ່ງໜຶ່ງ. ຫຼາຍຂວບຟ້າເດືອນປີມາ ເຂືອທັງສອງກໍ່ມີລູກນ້ອຍນຳກັນສອງໂຕ ອັນເປັນຄວາມຊື່ນຊົມຂອງເຂົາຄູ່ຜົວເມັຽນັ້ນແທ້ແລ. ວັນໜຶ່ງຍັງມີຊ້າງສານຮ້າຍໂຕໜຶ່ງພ້ອມດ້ວຍບໍລິວານເດີນຄວ່າມາ ຟັງສຽງນັນເນືອງແຜດກ້ອງເໝືອນຟ້າຈິປົ້ນດິນຈິໄຫວ. ນົກນ້ອຍສອງຜົວເມັຽມີຄວາມຢ້ານກົວເປັນອັນມາກ ຈຶ່ງຮີບພາກັນອອກໄປທູນພະຍາຊ້າງສານນັ້ນວ່າ:"ດູລາຂ້າໄທວ້ມະຫາຣາຊເຈົ້າ ຂ້າພະບາດທັງສອງມີຮັງ ແລະມີລູກອ່ອນຢູ່ພຸ່ມໄມ້ພຸ່ມນີ້ ຂໍໃຫ້ພະຍາເຈົ້າສິງສານ ນຳລິພົນເວັ້ນໄວ້ຊີວິດແກ່ລູກອ່ອນຂ້ານ້ອຍແດ່ທ້ອນ ພວກຂ້ານ້ອຍຂໍເປັນໜີ້ບຸນຄຸນອົງພໍ່ພະຍາຕາບຕໍ່ເທົ້າວັນຕາຍພຸ້ນຂ້ານ້ອຍ ແມ່ນວ່າພະອົງຕ້ອງການຕັດສັ່ງອັນໃດມາຂ້ານ້ອຍທັງສອງຈະຂໍເອົາຊີວິດເປັນເດີມພັນ ຂໍເດຊະຂ້ານ້ອຍເທີດ".



ແຕ່ນັ້ນຊ້າງສານຜູ້ເປັນໃຫຍ່ ແລະມີກຳລັງກວ່ານາໆສັດສາວາສິ່ງທັງຫຼາຍໃນຈັກກະວານ ເມື່ອເຫັນວ່າໂຕນ້ອຍໆບໍ່ຊ່ຳເລັບຕີນຂອງຕົນ ກ້າມາເວົ້າຈາກັບຕົນດັ່ງນີ້ກໍ່ມີຄວາມໂອຫັງຂຶ້ນ ຈຶ່ງເວົ້າໃສ່ນົກວ່າ:

" ອັນສູເຈົ້ານົກນ້ອຍ ສູສັງມາອວດດີເຂົ້າມາຂັດຂວາງທາງເດີນຂອງກູ ຜູ້ເປັນເຈົ້າແຫ່ງສັດຕະວະໂລກທັງຫຼາຍສັນນີ້ ສູບໍ່ຢາກໃຫ້ລູກສູຕາຍ ສູຈົ່ງຍ້າຍອອກໄປເອງ".
ຄັ້ນເວົ້າແລ້ວຊ້າງກໍ່ແຜດສຽງຂຶ້ນ ສັ່ງໃຫ້ບໍລິວານບຸກເຂົ້າຫັກໄມ້ຟາດຕີເຂົ້າຢຽບທຳລາຍພຸ່ມໄມ້ທີ່ມີຮັງນົກນັ້ນ ມຸ່ນອອບຍອບຢ່າງບໍ່ມີຄວາມອີນດູກູນາແຕ່ປະການໃດ".

ເມື່ອຜູ້ເປັນລູກຕາຍໄປແລ້ວ ນົກໄຊ່ນ້ອຍສອງຜົວເມັຽກໍ່ໄດ້ແຕ່ຮ້ອງໄຫ້ຮ່ຳໄຮ ບໍ່ຮູ້ວ່າຈະກະທຳສິ່ງປະການໃດ. ພວກເຂົາໄດ້ພາກັນບິນໄປ ບິນໄປ ພໍດີໄປພົບກາໂຕໜຶ່ງເຂົາຈຶ່ງເຂົ້າໄປຂໍຄວາມເປັກສາຫາລືນຳກາ ເມື່ອນັ້ນກາເລີຍເວົ້າວ່າ:

"ໂອຍເຈົ້າທັງສອງເຮີຍ ໃຜຈິຖຽງຄວາມຕາຍບໍ່ມີແພ້ ອັນວ່າຄຳຕາຍນີ້ແຂນຄໍທຸກບາດຢ່າງ ກຳມັດຈຸຣາຊມາຮອດແລ້ວ ແຂວນຟ້າກໍ່ບໍ່ຟັງເຈົ້າເຮີຍ ແມ່ນແຕ່ເທວະບຸດເທວະດາຢູ່ຟ້າ ມາຫ້າມກໍ່ບໍ່ຟັງທ່ານເຮີຍ ແມ່ນຈະເອົາເງິນຮ້ອຍຄຳແສນມາຊ່ອຍຈ້າງໃຜນັ້ນບໍ່ທ່ອນຄືນເຈົ້າເຮີຍ" ຄັ້ນເວົ້າແລ້ວກໍ່ບອກນົກໄຊ່ບິນໄປເປັກສາຫາລືນຳຜູ້ອື່ນເບິ່ງ ຫາກວ່າພໍຈະຊ່ອຍໄດ້ເມື່ອໜ້າຈຶ່ງຄ່ອຍມາ ນົກໄຊ່ຂາບອຳລາກາແລ້ວ ກໍ່ພາກັນບິນໄປຫາກົບຢູ່ແຄມໜອງນ້ຳ. ເມື່ອກົບເຫັນນົກໄຊ່ມາຫາ ກໍ່ເລີຍຖາມຂ່າວວ່າ: " ດູລາ ເຈົ້າກູທັງສອງ ມີເຫດຮ້ອນປະການໃດເດ ຈຶ່ງດຸ່ງເດີນມາພີ້" ນົກໄຊ່ໄດ້ລາຍງານເຖິງເລື່ອງລາວຄວາມເປັນມາ ທີ່ຊ້າງໄດ້ມາຢຽບລູກຂອງຕົນຕາຍໄປໃຫ້ກົບຮູ້ ແລ້ວກົບກໍ່ກ່າວວ່າ: "ເຈົ້າສະຫາຍເຮີຍ ອັນວ່າຄວາມຕາຍນີ້ບໍ່ມີໃຜເອົາຄືນມາໄດ້ ດີທີ່ຜີປອງເຂົ້າເອົາປັນຍາຊູຊ່ອຍຍັງຈິໄດ້ຕອບແຄ້ນມືເຈົ້າເມື່ອລຸນສະຫາຍເຮີຍເປັນດັ່ງນິທານຄຸດໂອທັງກໍ່ຕາຍມອດມ້ວຍ ດ້ວຍປັນຍາຂອງເຕົ່າ ກໍ່ມີໃນກາລະຄັ້ງໜຶ່ງນັ້ນເອງ". ແລ້ວກົບກໍ່ເລົ່ານິທານພະຍາຄຸດກັບເຕົ່າໃຫ້ນົກໄຊ່ຟັງ.



# I. ບັ້ນຄຸດກັບເຕົ່າຊ່ວງກັນ

ວັນໜຶ່ງພະຍາຄຸດບິນເວີ່ນອອກຄວ່າຫາກິນ ເລີຍບິນໄປພົບເຕົ່າໂຕໜຶ່ງ ຍ່າງງຸ້ມໆຫາກິນຢູ່ແຄມໜອງແຫ່ງໜຶ່ງ ຄຸດເລີຍບິນລົວຊູດຈັບເອົາເຕົ່າໄປ ເມື່ອນັ້ນເຈົ້າເຕົ່າຜູ້ແຂ່ງບໍ່ຊາຂາບໍ່ເກົ່ງ ແຕ່ມີພະທຍາປັນຍາອັນສັງມແຫຼມຈຶ່ງເວົ້າກັບຄຸດວ່າ:

"ຄຸດເຮີຍ ອັນເຮົາຫາກຢູ່ພໍເຮົາ ຫາກິນພໍເຮົາ ເຈົ້າກໍ່ມາລັກຊູດເອົາເຮົາ ເຮົາບໍ່ງຶດທ່ານທໍ່ໃຍດອກເນີ. ຕ່າງໃຜກໍ່ຕ່າງຫາຂຶບຫາກິນ ບໍ່ອຶດບໍ່ຢາກສັງເລີຍ. ແຕ່ຜູ້ມີລິດທີເກ່ງກ້າທັງຫຼາຍ ເຂົາບໍ່ເຄີຍຫາກິນແບບຕໍ່າຕ້ອຍຄືເຈົ້າດອກ ເຈົ້າເອງກໍ່ຄວນຮູ້ສຶກລະອາຍໃຈ ແລ້ວມາຫາກິນດ້ວຍຄວາມຊອບຄືເພິ່ນຄືທ່ານແດ່. ຄັນວ່າທ່ານເກ່ງກ້າແທ້ ແລະແນວໃດກໍ່ແນວຈິກິນຂ້ອຍແທ້ ກໍ່ຂໍລອງລິດທີກັບເຈົ້າເບິ່ງຈັກເທື່ອແດ່. ຄັນເຈົ້າແພ້ຂ້ອຍ ຂ້ອຍກໍ່ຈະຍອມໃຫ້ເຈົ້າກິນຢ່າງມີກຽດໂດຍດີ".

ເມື່ອນັ້ນຄຸດກໍ່ຫົວອະເຫີຍຂຶ້ນ ພ້ອມທັງຖາມເຕົ່າວ່າ: "ເຈົ້າຈິພະນັນຫຍັງກັບຂ້ອຍ". ເຕົ່າຕອບວ່າ: "ເຮົາມາແຂ່ງຄວາມໄວນຳກັນຢູ່ແຄມແມ່ນ້ຳຄຸງຄາ ໃນອີກເຈັດວັນຂ້າງໜ້າ". ເມື່ອຄຸດໄດ້ຍິນດັ່ງນັ້ນ ກໍ່ກາກາກຫົວຂວັນຂຶ້ນຢ່າງແຮງທັນທີ ພ້ອມທັງເວົ້າວ່າ:

" ອັນເຈົ້າຈິແຂ່ງຄວາມໄວ ຫຍັງບໍ່ກົ້ມເບິ່ງຂາໂຕທັ້ນແດ່ ກະດຽວວ່າສັ້ນຂໍ້ຫຼໍ້ທໍ່ຂໍ້ໝາກຂາມນີ້ ເວົ້າເປັນໜ້າຢາກຫົວແທ້ນໍ". ເມື່ອທັງສອງຕົກລົງປົງໃຈແຂ່ງກັນ ແລະໄດ້ນັດໝາຍກັນຮຽບຮ້ອຍແລ້ວ ຄຸດກໍ່ປ່ອຍເຕົ່າໄປ ແລະຄຸດກໍ່ແຍກທາງໄປດ້ວຍສຽງເຢາະເຍີ້ຍອະເຫີຍຫົວຂວັນເຕົ່າ. ສ່ວນເຕົ່າເອງກໍ່ອາໄສເວລາທີ່ມີຕັ້ງຫົກເຈັດວັນ ປ່າວເຕືອນໃຫ້ບັນດາເຕົ່າທັງຫຼາຍ ທີ່ຢູ່ຕາມແຄມຝັ່ງອັນຍາວຢຽດຂອງແມ່ນ້ຳຄຸງຄາ ອັນມີເຖິງເກົ້າລ້ານໂກດໂຕ ໃຫ້ພາກັນຢາຍຢູ່ຕາມແຄມຝັ່ງ ຕາບຕໍ່ເທົ້າຈົນສຸດສາຍແມ່ນ້ຳນັ້ນ ພ້ອມທັງໄດ້ນັດໝາຍກັນໄວ້ວ່າເມື່ອຄຸດກູກເອີ້ນເວລາໃດຈຶ່ງໃຫ້ຜູ້ຢູ່ທາງໜ້າຂານຮັບຄຸດຍາມນັ້ນດັ່ງນີ້ຕະຫຼອດໄປ.

ພໍເຖິງມື້ຖ້ວນເຈັດມາແລ້ວ ພະຍາຄຸດກໍ່ໄດ້ມາທີ່ນັດໝາຍກັນກັບເຕົ່າ ແລ້ວກໍ່ເລີຍພະນັນກັນ. ເມື່ອນັ້ນຄຸດເຫັນວ່າເຕົ່າຂາສັ້ນໄປບໍ່ຊາມາບໍ່ເກົ່ງກໍ່ເລີຍບິນຊ້າທຳມະດາ. ພໍເມື່ອບິນໄປໄດ້ໄລຍະໜຶ່ງຄຸດເລີຍບິນຄືນກັບຫຼັງເພື່ອຈະເອີ້ນຫາເຕົ່າ ຄຶດວ່າເຕົ່າຄົງຈະຄາມະຍຸ່ງມະຍ່າງຢູ່ປ່າຫຍ້າກັບທີ່. ແຕ່ພໍເມື່ອຄຸດເອີ້ນຫາເຕົ່າກໍ່ກູກຢູ່ຂ້າງໜ້າໄກໄປແລ້ວຄຸດຮີບບິນທອບຢຽດໄປທັນທີ ເມື່ອເຖິງບ່ອນທີ່ເຕົ່າກູກຂານແລ້ວ ເຂົາກໍ່ເອີ້ນຫາ ເຕົ່າອີກ ເຕົ່າກໍ່ກູກຢູ່ຂ້າງໜ້າໄກຈາກຕົນໄປອີກ ພ້ອມທັງຮຽກໃຫ້ບິນໄວເພື່ອໃຫ້ທັນເຕົ່າຕໍ່ໄປ. ຄຸດກໍ່ໃສ່ໃຈບິນເລື້ອຍໆແຕ່ພໍເມື່ອກູກໃສ່ເຕົ່າຍາມໃດກໍ່ບໍ່ເຄີດເຕົ່າຈັກເທື່ອ ແລ້ວຄຸດຜູ້ຢ້ານເສັຽປຽບ ແລະ ເສັຽໄຊ ກໍ່

ເລີຍຈຳຕ້ອງບິນໄວເຂົ້າຊັກໄຊ້ ແຕ່ບິນໄວທີ່ໃດກໍ່ບໍ່ສາມາດເລີດເຕົ່າໄດ້. ຄຸດບິນຢັ່ງມື້ ໃນທີ່ສຸດກໍ່ໝົດແຮງຈຶ່ງຕົກຕາຍກັບທີ່. ອັນນີ້ເອງຮຽກວ່າພະລັງ ເຖິງວ່າຈະກ້າແກ່ນເຂັ້ມແຂງທີ່ໃດກໍ່ບໍ່ສູ້ປັນຍາ ເຖິງວ່າຜູ້ມີປັນຍາຈະເປັນຄົນອ່ອນນ້ອຍພະລັງກໍ່ຕາມ.

ເມື່ອນົກໄຊ່ໄດ້ຟັງນິທານຄຳສອນຈາກພະຍາກົບແລ້ວ ກໍ່ຂໍອຳລາຈາກໄປ ໂດຍຝາກຄວາມເວົ້າໄວ້ວ່າ ຖ້າພາຍໜ້າໄປ ຫາກມີຄວາມຈຳເປັນກໍ່ຈະຂໍຕ່າວຄືນມາ ຂໍຄວາມຊ່ອຍເຫລືອຈາກກົບຕື່ມ. ນົກໄຊ່ທັງສອງບິນໄປພໍ້ແມງວັນຊຽວ ກໍ່ເລີຍຂໍເຂົ້າລາຍງານເຫດການຕ່າງໆ ທີ່ປະສົບມາໃຫ້ແມງວັນຊຽວຟັງ ພ້ອມທັງຂໍຄວາມເປີກສາຫາລືວິທີແກ້ແຄ້ນນຳດ້ວຍ. ແຕ່ນັ້ນ ແມງວັນຊຽວຈຶ່ງບອກໃຫ້ນົກໄຊ່ວ່າ:

"ເລື່ອງນີ້ຮຽມບໍ່ຢ້ານ ມາພີ້ຈິຊ່ອຍໄຊ"

ແລ້ວແມງວັນເລີຍຊັກເອົານິທານເລື່ອງໜຶ່ງຊື່ວ່າ: "ປະໂຫຍດພຸ້ນ ພາຍພີ້ຕ່າງກັນ" ໃຫ້ນົກໄຊຟັງ:



## II. ບັ້ນປະໂຫຍດພຸ້ນ ພາຍພີ້ຕ່າງກັນ

ແຕ່ກີ້ແຕ່ກ່ອນມີຊາຍຄົນໜຶ່ງ ເອົາງົວແມ່ຂອງຕົນໄປລ້ຽງຢູ່ຕາມທົ່ງຫຍ້າ ຮ່ວມກັບເພື່ອນລ້ຽງງົວນຳກັນຫຼາຍຄົນ ເຖິງຕອນສວາຍແດດກ້າມາ ເວລາຜູ້ຄົນຫິວເຂົ້າ ແລະຫິວນ້ຳເຂົາເລີຍຣີດນົມງົວຂອງເຂົາອອກ ແລ້ວແບ່ງປັນໃຫ້ໝູ່ກິນນຳ ເມື່ອໝູ່ໄດ້ກິນແລ້ວໃຜກໍ່ຕິດໃຈເລີຍຖາມຊາຍຄົນນັ້ນວ່າ: "ເອົານ້ຳຫວານນີ້ມາແຕ່ທາງໃດ". ຊາຍຄົນນັ້ນເລີຍຕອບວ່າ: "ເອົາມາຈາກນົມງົວຂອງເຮົາເອງ".ເມື່ອໄດ້ຍິນດັ່ງນັ້ນຊາຍອີກຄົນໜຶ່ງທີ່ເປັນຜູ້ມີເງິນ ກໍ່ເລີຍຕໍ່ໂອມເອົາງົວແມ່ນົມນັ້ນນຳຊາຍຜູ້ເປັນເຈົ້າຂອງ. ຊາຍຜູ້ເປັນເຈົ້າຂອງບໍ່ຢາກຂາຍງົວແມ່ນົມດັ່ງກ່າວເລີຍ ແຕ່ຊາຍຄົນນັ້ນກໍ່ຄວງໃຫ້ຂາຍໂດຍເພີ່ມຄ່າລາຄາແພງຂຶ້ນເປັນພັນໜຶ່ງ. ເມື່ອໄດ້



ລາຄາດີແຖມຍັງຖືກໜ່ວງໜ່ຽວບໍ່ແລ້ວ ຊາຍງົວນົມຈຶ່ງຈຳເປັນຕ້ອງຂາຍໄປ. ເມື່ອຊາຍຜູ້ນັ້ນໄດ້ງົວແມ່ນັ້ນໄປແລ້ວເຂົາກໍ່ເອົາໂອມາໂຕ່ງ ແລ້ວກໍ່ບີບນົມງົວຢ່າງແຮງ. ເມື່ອງົວເຫັນວ່າບໍ່ແມ່ນເຈົ້າຂອງມັນ ທັງຍັງບີບນົມກະທັ່ງກະແທກເຮັດໃຫ້ເຈັບປວດ ງົວເລີຍໃຈຮ້າຍຈະຊົນຊາຍຄົນນັ້ນ. ເມື່ອເປັນດັ່ງນັ້ນຊາຍຄົນນັ້ນຈຶ່ງເອົາຫຼັກມາຝັງສອງຫຼັກໜີບງົວໄວ້ແລ້ວກໍ່ກຸມບີບ

ເອົານໍ້ານົມຕໍ່ໄປ. ເມື່ອບິບທີ່ໃດກໍ່ບໍ່ໄດ້ນໍ້ານົມຈັກເມັດເລີຍ ມັນກໍ່ໃຈຮ້າຍເອົາຄ້ອນມາທຸບຕີງົວຈົນຕາຍ.

ອັນນີ້ເພິ່ນເວົ້າວ່າ "ດຽວວ່າປະໂຫຍດພຸ້ນ ພາຍພີ້ກໍ່ຕ່າງກັນ" ອັນແປວ່າ ແມ່ນວ່າຈະເຮັດອັນໃດກໍ່ດີ ເມື່ອເຫັນເພິ່ນເຮັດໄດ້ ບໍ່ແມ່ນຕົນເອງຈະເຮັດໄດ້ໂລດຖ້າບໍ່ຊ່າງເຮັດບໍ່ຮອບຄອບ. ແມງວັນເອົານິທານນີ້ມາກ່າວສອນນົກໄຊ່ທັງສອງ ແລ້ວເຂືອກໍ່ອໍາລາຈາກໄປ ພ້ອມທັງສັ່ງແມງວັນໄວ້ວ່າ ຖ້າມີສິ່ງປະການໃດກໍ່ຈະກັບມາຂໍຄວາມຊ່ວຍເຫຼືອຈາກແມງວັນຕື່ມ.

ແລ້ວນົກໄຊ່ນ້ອຍສອງຜົວເມັຽກໍ່ບິນຕໍ່ໄປ. ເມື່ອໄປເຖິງນົກໄຊ່ໂກນເຮືອໂຕໜຶ່ງ ເຂົາທັງສອງກໍ່ເລີຍຂໍເຂົ້າພົບ ແລະ ເລົ່າຄວາມເປັນມາທັງຫມົດສູ່ນົກໄຊ່ເຮືອໂຕນັ້ນຟັງທຸກປະການ. ຝ່າຍນົກໄຊ່ເຮືອເມື່ອໄດ້ຟັງຄວາມຂອງນົກໄຊ່ນ້ອຍສອງຜົວເມັຽແລ້ວ ນົກໄຊ່ເຮືອໂຕນັ້ນເລີຍເວົ້າຂຶ້ນວ່າ:

“ເຫັນວ່າຕົນເອງເປັນຜູ້ໃຫຍ່ແລ້ວ ຫາແຕ່ໃຊ້ອໍານາດບາດໃຫຍ່ບຽດບຽນ ແລະ ຂົ່ມເຫັງຜູ້ນ້ອຍ ແນວນີ້ບໍ່ເປັນທັມແລ”. ຂ້ອຍຈິເລົ່ານິທານເລື່ອງໜຶ່ງສູ່ເຈົ້າຟັງ:



## III. ບັ້ນນົກໄຊ່ໂກນກັບເສືອໂຄ່ງ

"ແຕ່ກ່ອນຍັງມີເທື່ອໜຶ່ງ ນົກໄຊ່ໂກນໂຕໜຶ່ງບິນໄປຫາກິນ ເລີຍໄປພໍ້ເສືອໂຄ່ງໂຕໜຶ່ງນອນອ້າປາກນ້ຳລາຍຍ້ອຍຢູ່ບໍ່ຂາດ ນົກໄຊ່ເລີຍບິນເຂົ້າໄປໃກ້ ແລະ ກໍ່ຖາມເສືອວ່າ:"

"ເຈົ້າກູເປັນປະການໃດຈຶ່ງນອນຄາງ ແລະ ອ້າປາກຢູ່ຈັ່ງຊີ້ ຫລືເຈົ້າຫາກເຈັບເປັນປະການໃດຈາ"

ເສືອໂຄ່ງເລົ່າເລື່ອງຄວາມເປັນມາໃຫ້ນົກໄຊ່ຟັງວ່າ: "ຂ້ອຍໄດ້ຄວ່າປ່າຫາຂອງກິນບໍ່ຂາດຈັກມື້ ມາມື້ໜຶ່ງກະດູກເລີຍປັກເຂົ້າເຫືອກ ແລະ ຄາຢູ່ເຫືອກຂອງຂ້ອຍ ເອົາອອກກໍ່ບໍ່ໄດ້ ອັນນຳຄວາມເຈັບປວດເຫລືອທີ່ສຸດມາໃຫ້ຂ້ອຍ ຂໍໃຫ້ເຈົ້າຊ່ອຍເອົາອອກໃຫ້ຂ້ອຍແດ່ ຂ້ອຍຈິບໍ່ລືມບຸນຄຸນເຈົ້າເທົ້າຕາຍເລີຍ ແລະ ເມື່ອໃດຂ້ອຍໄດ້ອາຫານແລ້ວ ຂ້ອຍຈິແບ່ງໃຫ້ເຈົ້າກິນນຳດ້ວຍ".

ເມື່ອໄດ້ຍິນຄວາມນີ້ນົກໄຊ່ກໍ່ບອກໃຫ້ເສືອອ້າປາກຂຶ້ນອີກ ແລ້ວນົກໄຊ່ກໍ່ພິປອງສັບເອົາກະດູກ ອັນປັກຢູ່ເຫືອກເສືອນັ້ນອອກຈົນໄດ້. ເສືອຮູ້ສຶກຫາຍເຈັບປວດທັນທີ ແລ້ວກໍ່ຍ່າງຈາກໄປ. ສ່ວນນົກໄຊ່ກໍບິນຕາມເສືອນັ້ນໄປຍັ້ງມື້ຍັ້ງເດືອນ ຫວັງວ່າຈະໄດ້ສ່ວນແບ່ງອາຫານຈາກເສືອ ແຕ່ແລ້ວເສືອພັດບໍ່ເອົາຫົວຊາ ແລະບໍ່ຫ່ວງບໍ່ໃຍຕໍ່ນົກໄຊ່ແຕ່ປະການໃດເລີຍ ເມື່ອມັນໄດ້ອາຫານ ມັນກໍ່ບໍ່ແບ່ງໃຫ້ນົກກິນຈັກເມັດ. ເມື່ອນົກທວງເອົານຳມັນ ມັນເລີຍຕອບນົກວ່າ:

"ກູໄດ້ເປັນຂີ້ຂ້າມຶງມາແຕ່ມື້ໃດ ? . ຖ້າມຶງຢາກຊື້ນມຶງຫຍັງບໍ່ໄປຊອກເອົາເອງ ມົວແຕ່ນອນຢູ່ໃນຮູໂກນຂອງມຶງຫັ້ນເທາະ ທ້ອງມຶງຫາກຈິເຕັມ"

ເມື່ອໄດ້ຍິນຄວາມນີ້ ນົກໄຊ່ກໍ່ມີຄວາມຄຽດ ແລະ ເຈັບແຄ້ນແໜ້ນໃຈເຫລືອທີ່ສຸດ ຈຶ່ງພະຍາຍາມຈອບຫາໂອກາດອັນອຳນວຍ. ມື້ໜຶ່ງເສືອໂຄ່ງຫາໄດ້ກວາງໂຕໜຶ່ງມາກິນຈົນອີ່ມທ້ອງອີ່ມໄສ້ແລ້ວມັນກໍ່ລົ້ມນອນຫລັບຂູດໆ. ເມື່ອນົກໄຊ່ເຫັນເປັນໂອກາດຈຶ່ງຊວນຜູ້ເປັນເມັຽພາກັນບິນລົງໄປສັບແກ່ນຕາຂອງເສືອຄົນລະເບື້ອງ ເສືອກໍ່ເລີຍຕາບອດ ບໍ່ຮູ້ຈະຄວ່າຫາອາຫານອັນໃດກິນເລີຍ ຈາກນັ້ນ ຢູ່ມາບໍ່ນານເສືອກໍ່ຈ່ອຍຜອມ ແລ້ວກໍ່ສິ້ນໃຈຕາຍ.

ເມື່ອນົກໄຊ່ໂກນໂຕນັ້ນເອົານິທານນົກໄຊ່ແລະເສືອມາເລົ່າສູ່ນົກໄຊ່ສອງຜົວເມັຽຟັງ ແລ້ວເຂົາກໍ່ມີຄວາມຄິດສ່ອງໃສຂຶ້ນມາ ຈຶ່ງຂໍເພິ່ງນົກໄຊ່ໂກນໂຕນັ້ນໄປຊ່ອຍພວກເຂົານຳ. ແລ້ວນົກໄຊ່ສາມໂຕກໍ່ພາກັນບິນໄປຫາກົບ ໄປຫາແມງວັນ ແລະຫາພະຍາກາ. ເຂືອທັງໝົດ

ເປີກສາຫາລື ແລະ ວາງແຜນກັນແລ້ວ ກໍ່ພາກັນໄປສູ່ບ່ອນທີ່ພະຍາຊ້າງສານສະຖິດຢູ່. ພວກເຂົາພະຍາຍາມສັງຊອມເບິ່ງ ເວລາທີ່ຊ້າງໂຕຮ້າຍຂາດນັ້ນນອນຫລັບ ເມື່ອໄດ້ໂອກາດດີເວລາຊ້າງນອນຫລັບແລ້ວ ນົກໄຊ່ກໍ່ພາກັນບິນໄປສັບແກ່ນຕາຄີນລະເບື້ອງບອດທັງສອງ ແລ້ວແມງວັນກໍ່ໄປໄຂ່ໃສ່ເປັນໜອນເຈາະ ໄດ້ສອງສາມວັນມາ ຊ້າງກໍ່ຫິວນໍ້າ. ເມື່ອນັ້ນກົບກໍ່ໄປຖ້າຢູ່ເຫວເລິກ ແລ້ວກໍ່ຮ້ອງໂອບໂອບຂຶ້ນ ຊ້າງນຶກວ່າມີໜອງນໍ້າກໍ່ຍ່າງເບັດໜ້າໄປຫາແລ້ວກໍ່ຕົກລົງໄປໃນເຫວຕາຍແຕ່ບັດນັ້ນແລ. ແຕ່ນັ້ນກາກໍ່ບອກເຕືອນຝູງກາທັງຫລາຍໃຫ້ມາກິນຊາກຊ້າງຮ້າຍຕົວນັ້ນ ຫມົດສັ່ງໄປກໍ່ມີດັ່ງນີ້ແລ.

ບັນດິດໂຕ ອັນວ່າສຽວສະຫວາດໄດ້ນຳເອົານິທານເລື່ອງນົກໄຊ່ ແລະ ຊ້າງ ມາທູນຖວາຍເປັນບົດຮຽນແກ່ພະຍາຈຳປາມະຫານະຄອນກໍ່ມີທໍ່ນີ້ແລ ບຸກຄະລະຜູ້ໃດ ເມື່ອໄດ້ເປັນໃຫຍ່ແລ້ວ ຂົ່ມເຫັງເອົາຂອງ ແລະ ຍາດບ້ານຊີງເມືອງໂດຍບໍ່ມີຄວາມຮັກແພງ ແລະ ເມດຕາບ່າວໄພ່ພວກຜູ້ນ້ອຍແລ້ວ ກໍ່ຈະເປັນບາບກຳເຫມື້ອນດັ່ງຊ້າງສານໂຕນັ້ນທັ້ນແລ.



# ພາກເສີມ

ຫາກຊຸມຫລານໆຂຶ້ນເມືອຖ້ານທີ່ໜຶ່ງຂອງພະເຈດີທາດຫລວງ ອັນເປັນມິ່ງຂວັນຂອງຊາດ ທັງເປັນສັນຍາລັກຂອງຊາດລາວເຮົາ ຫລານຈະພົບຂໍ້ຄວາມທີ່ຂຽນໄວ້ທີ່ນັ້ນ 30 ຄຳເຊິ່ງເພິ່ນເອີ້ນວ່າ ປາຣະມີ30ທັດ ໃນນັ້ນຄຳທຳອິດທີ່ຫລານຈະພໍ້ຄື " [illegible] " (ປັນຍາປາຣະມີ) ແປວ່າຄົນເຮົາຕ້ອງຖືເອົາປັນຍາເປັນໃຫຍ່. ປັນຍາມາຈາກຄວາມຮູ້ ມີປັນຍາຈຶ່ງສະຫລາດ ເມື່ອສະຫລາດແລ້ວຈຶ່ງສາມາດຮູ້ແກ້ໄຂທຸກບັນຫາທີ່ຂວາງໜ້າເຮົາໄດ້ ແມ່ນຈະນ້ອຍຫລືໃຫຍ່ກໍ່ຕາມ ນັບຕັ້ງແຕ່ບັນຫາຊີວິດປະຈຳວັນຈົນເຖິງວຽກງານຂອງປະເທດຊາດບ້ານເມືອງ. ດັ່ງນີ້ເອງປູ່ຍ່າຕາຍາຍຂອງເຮົາຈຶ່ງເທີດທູນຄວາມຮູ້ ສະຕິປັນຍາເປັນຍອດຄະຕິ ແລະຈຶ່ງສະຫລັກຂໍ້ຄວາມນີ້ໄວ້ເປັນຄຳເອກຂຶ້ນຕົ້ນໃນພະເຈດີທາດຫລວງ. ເພິ່ນເວົ້າວ່າ: "ເງິນເຕັມພາ ບໍ່ທໍ່ຜະຫຍາເຕັມປູມ" ຄຳວ່າຜະຫຍາກໍ່ແມ່ນປັນຍາເຊັ່ນດຽວກັນ ເພິ່ນຢາກໝາຍຄວາມວ່າ ເຈົ້າຈະມີເງິນທໍ່ໃດກໍ່ດາຍ ກໍ່ບໍ່ແພ້ຜູ້ມີຜະຫຍາປັນຍາ.

"ຄວາມຮູ້ນ້ອຍ ຢ່າຜ່ານຄອງເມືອງ"

ຄົນຜູ້ມີຄວາມຮູ້ນ້ອຍ ຫຼື ໜ້ອຍ ຢ່າໄປວ່າການເມືອງ ຫຼື ຢ່າໃຫ້ວ່າການເມືອງ. ເພິ່ນເວົ້າໄວ້ອີກວ່າ:

"ບ່ອນບໍ່ສົມພໍນັ່ງ ຢ່ານັ່ງ
ບ່ອນບໍ່ສົມພໍນອນ ຢ່ານອນ
ຄວາມຮູ້ບໍ່ສົມພໍສອນ ຢ່າສອນ"

ໃນປະໂຫຍກສຸດທ້າຍນັ້ນ ເວົ້າແຈ້ງໄວ້ວ່າ: "ຖ້າມີຄວາມຮູ້ນ້ອຍ ຢ່າອວດວ່າໂຕຮູ້ ໂຕເກັ່ງ".

ມີຄວາມຮູ້ຈຶ່ງມີຜະຫຍາປັນຍາ ແລະ ສະຕິຊຳປະຊັນຍະທີ່ດີ ແລະ ກໍ່ຈຶ່ງມີຄວາມສາມາດ ດັ່ງນັ້ນເພິ່ນຈຶ່ງສອນໄວ້ອີກວ່າ: "ເປັນຄົນຊາຍ ໃຫ້ຄ່ອຍຮຽນຄວາມຮູ້" ແຕ່ກ່ອນຄືງມີແຕ່ຜູ້ຊາຍໄດ້ບວດຮຽນຂຽນອ່ານ ເພາະການຮຽນມີແຕ່ຢູ່ໃນວັດເທົ່ານັ້ນ ອີກດ້ານໜຶ່ງຜູ້ຊາຍຈະຕ້ອງເປັນເສົາຫລັກ ເສົາຄ້ຳແກ່ຄອບຄົວສະເໝີ ຈຶ່ງມີຄຳສອນໄວ້ໃຫ້ແກ່ຜູ້ຊາຍທີ່ນັ້ນ ເມື່ອສະຫລຸບຄວາມຕາມຄຳສອນຕ່າງໆນີ້ແລ້ວ ຫລານຈະເຫັນໄດ້ວ່າ: ຮຽນເພື່ອມີຄວາມຮູ້ ມີຜະຫຍາປັນຍາສູງສົ່ງຈຶ່ງຈະສາມາດວ່າຄອງບ້ານຄອງເມືອງໄດ້ ໝາຍຄວາມວ່າເປັນ"ຣັຖບູຣຸສ" ຫຼື "ສັຕບູຣຸສ"ໄດ້.



## ວັດຊຽງທອງ

ກ່ອນໜ້ານີ້ ສິບກວ່າປີ ເມື່ອທ່ານອາຈານ ອາຄົມ ວໍຣະຈິນດາ ຜູ້ອຳນວຍການສູນວິໄຈ ສິລະປະວັດທະນະທັມ ພາກຕາເວັນອອກສຽງເໜືອຂອງໄທຍ ແລະທ່ານອາຈານ ສຸຈິດ ວົງເທສ ບັນນາທິການເອກຂອງ ວາລະສານ " ສິລະປະ ແລະ ວັດທະນະທັມ " ຂອງໄທຍ ໄດ້ມາຢືນຊົງຢູ່ຕໍ່ໜ້າ ອາຣາມ ວັດຊຽງທອງ ຊົ່ວຂະນະໜຶ່ງ ແລ້ວທ່ານອາຈານທັງສອງ ເລີຍອຸທານອອກມາດ້ວຍນ້ຳສຽງຕ່າງກັນດັ່ງນີ້ :

ອາຈານ ອ. ວໍຣະຈິນດາ : " ສິລະປະນີ້ ມັນແກວ່ງ ມັນຕີງ ມັນມີວິນຍານ ມີຊີວິດ ບໍ່ເໝືອນກັບຂອງໄທຍ ມັນກະດ້າງ ແຂງ "

ອາຈານ ສ. ວົງເທສ : " ບໍ່ເກີດຂອງມັນແມ່ນທີ່ນີ້ ມັນມາຈາກທີ່ນີ້ "

ເມື່ອໄດ້ຟັງທັດສະນະຂອງອາຈານໃຫຍ່ຜູ້ຊ່ຽວຊານດ້ານສິລະປະຈາກປະເທດເພື່ອນບ້ານໃກ້ເຮືອນຄຽງຂອງພວກເຮົາທັງສອງແລ້ວ ຫລານຄົງຮູ້ສຶກເອກອ້າງໃນຕົວຂອງຫລານບໍ່ນ້ອຍແມ່ນບໍ່ ? ແຕ່ກໍ່ບໍ່ແນ່ວາໃນອານາຄົດຂ້າງໜ້າ ອາດຈະມີຈຳລອງວັດຊຽງທອງປະກົດຂຶ້ນຢູ່ແຫ່ງໃດແຫ່ງໜຶ່ງ ທີ່ປະເທດອື່ນກໍ່ເປັນໄດ້ ເພາະຊາດອື່ນກໍ່ມີຄວາມຊື່ນຊົມນຳຄວາມສະຫງ່າງາມແບບໜຶ່ງບໍ່ມີສອງຂອງວັດຊຽງທອງພວກເຮົານີ້ເຊັ່ນກັນ.

ວັດຊຽງທອງ ສ້າງຂຶ້ນປີ 1560 ຂອງ ຄ.ສ. ເພື່ອອຸທິດໃຫ້ແກ່ ທ້າວ ຈັນທະພະນິດຜູ້ຕັ້ງເມືອງຊຽງດົງຊຽງທອງໃນຍຸກໜຶ່ງແຫ່ງປະຫວັດສາດຂອງຊາດລາວໂດຍພະເຈົ້າໄຊຍະເຊດຖາທິຣາຊ ຜູ້ຄອງຣາຊະອານາຈັກລ້ານຊ້າງໃນຍຸກທີ່ໄພສານ ແລະ ຮຸ່ງເຮືອງທີ່ສຸດ ຄືມີເຂດແດນກວມເອົາພູພຽງໂຄຣາຊ ລ້ານນາ ສິບສອງພັນນາ ສິບສອງເຈົ້າໄທ ແລະ ສ່ວນອື່ນໆຫລາຍຕອນອ້ອມຮອບດິນລາວປັດຈຸບັນ.

ເປັນວັດສຳຫລັບປະກອບຣາຊະພິທີອະພິເສກຣາຊະໂອຣົສຂຶ້ນຣາຊະບັນລັງຫຼາຍອົງ ດັ່ງນັ້ນ ຈຶ່ງໄດ້ຮັບການສ້າງຂຶ້ນດ້ວຍສິລະປະອັນອ່ອນຊ້ອຍ ກິນນ້ຳກິນເນື້ອ ແລະພິດສະດານເປັນພິເສດ ເຊິ່ງຫາວັດໃດປຽບປານບໍ່ໄດ້ເລີຍ.

ວັດຊຽງທອງ ອັນເປັນມໍລະດົກລ້ຳຄ່າຂອງຊາວລາວເຮົາ ໄດ້ລອດພົ້ນອອກຈາກການເຜົາຜານປຸ້ນສະດົມຕົວເມືອງຫລວງພະບາງໃນປີ 1887 (ຄ.ສ) ຂອງແດວວັນຕຣີ ຫົວໜ້າພວກຫໍ້ທຸງດຳ ກໍ່ຍ້ອນວ່າເຂົາເອງໄດ້ມາບວດຮຽນທຮຽນອ່ານນະວັດນີ້ເອງ. ປີ 1927 ວັດນີ້ໄດ້ຮັບປະຕິສັງຂອນໃຫຍ່ຄັ້ງໜຶ່ງ ຫຼັງຈາກນັ້ນມາ ກໍ່ໄດ້ມີການຊ້ອມແຊມຮູບແຕ້ມຮູບຄວັດ ເປັນຕົ້ນແມ່ນໄດ້ປະດັບຮູບແກ້ວນິທານຕ່າງໆ ເຊັ່ນ ຈະເວົ້າເຖິງນິທານ ແລະ ພື້ນແຜ່ນຕ່າງໆ ເຊັ່ນ : ທ້າວສຽວສະຫວາດ ພະລັກພະລາມ ຈັນທະພານິດ ທ້າວເຕົ່າຄຳ ນາງຄຳກອງ ແລະ ອື່ນໆອີກຫລາຍເລື່ອງ. ເມື່ອເບິ່ງທົ່ວທັງລະບົບແລ້ວ ມັນເປັນສິ່ງທີ່ດູດດຶງຄວາມສົນໃຈ ຄວາມຢາກຮູ້ຢາກເຂົ້າໃຈອີຫລີ ແລະ ສິ່ງເຫລົ່ານັ້ນກໍ່ມີຢູ່ຢ່າງອາບັນຕັງ ເຊິ່ງກ້າຢາກຈະສຳພັດ ແລະ ເຂົ້າໃຈໝົດທຸກຢ່າງທີ່ເວົ້າມານັ້ນແລ້ວ ວັນໜຶ່ງວັນດຽວເໝືອນກັບວ່າບໍ່ໄດ້ສຳພັດກັບຫຍັງເລີຍ. ກົງກັນຂ້າມກ້າຫາກຫຼານໃຊ້ເວລາ ປ່ອຍໃຫ້ຄວາມຮູ້ສຶກຂອງຫລານເຂົ້າເຖິງມັນ ຫຼານຈະຮູ້ສຶກວ່າຕົກຢູ່ໃນໂລກແຫ່ງພິດສະດານແຫ່ງນິຍາຍທີ່ບໍ່ສ້ຽງສຸດເປັນເລີຍ.

ຂໍໃຫ້ຫລານໂຊກດີ

ຈາກລຸງ